<u>ກຸ່ມຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ</u>

Copyright © 2002 by BAPTISTWAY PRESS®.
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ.  ຫ້າມ ຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ.  ຖ້າຢາກຊາບ ລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ:  ເດືອນ ມີນາ, ໒000

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Coordinator, Church Health and Growth Section: H. Lynn Eckeberger
Director, Bible Study/Discipleship Center: Dennis Parrott
Administrator, Curriculum Development Office:  Bernard M. Spooner
Publishing consultant: Ross West, Positive Difference Communications

Language Materials Team

Teaching Procedures Writer for Lessons 1-3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1-3
Phaisane Somsith, Samakeetam Baptist Fellowship, Dallas, Texas

Teaching Procedures Writer for Lessons 4-6
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Lessons 4-6
Phaisane Somsith, Samakeetam Baptist Fellowship, Dallas, Texas

Teaching Procedures Writer for Lessons 7-9
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 7-9
Phaisane Somsith, Samakeetam Baptist Fellowship, Dallas, Texas

Teaching Procedures Writer for Lessons 10-13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 10-13
Phaisane Somsith, Samakeetam Baptist Fellowship, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 1
# ຈົ່ງສາລະພາບວ່າເຮົາຕ້ອງການພຣະເຈົ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ເອຊາຢາ 64:1-9

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ເອຊາຢາ 63:7-64:12

**ຈຸດສຳຄັນຂອງບົດຮຽນນີ້:** ການສເລີມສລອງຄຣິສມາດທີ່ແທ້ຈິງນັ້ນແມ່ນເລີ້ມຕົ້ນ ຢູ່ທີ່ຄວາມຮຽກຮ້ອງຕ້ອງການຂອງພວກເຮົາ.

**ຄຳຖາມເພື່ອສຳຣວດ:** ດ້ວຍຈິດສຳນຶກທີ່ພວກເຮົາມີຢູ່, ພວກເຮົາຕ້ອງການພຣະເຈົ້າຢ່າງຈິງຈັງແທ້ບໍ່?

**ຈຸດປະສົງຂອງບົດນີ້:** ເພື່ອຈະສອນໃຫ້ທ່ານທັງຫລາຍ ສາລະພາບວ່າ ພວກເຮົາຕ້ອງການພຣະເຈົ້າ ຢ່າງແທ້ຈິງ

## ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ຈົ່ງນຳໄຟສາຍມານຳ ແຕ່ບໍ່ໃຫ້ມີຖ່ານ. (ເອົາຖ່ານມາດ້ວຍແຕ່ບໍ່ໃສ່ໃນໄຟສາຍເທື່ອ) ສົ່ງໄຟສາຍໃຫ້ແຕ່ລະຄົນເບິ່ງ ແລະເປີດລອງເບິ່ງ. ຕັ້ງຄຳຖາມວ່າ ໄຟສາຍນີ້ ຕ້ອງການຫຍັງ? ເອົາໄຟສາຍວາງໄວ້ໜ້າໂຕະ

2. ຊີວິດຂອງມະນຸດເຮົາຕ້ອງການຫຍັງແດ່ ເພື່ອດຳລົງຢູ່ໄດ້? ໃຫ້ນັກຮຽນເວົ້າ ແລ້ວຄຣູຂຽນໃສ່ກະດານ. (ຄຳຕອບອາດຈະມີ ອາກາດ, ອາຫານ, ນ້ຳ ແລະອື່ນໆອອກໄປ........)

3. ບອກນັກຮຽນວ່າວັນນີ້ ພວກເຮົາຈະຮຽນເຣື່ອງຄວາມຕ້ອງການພຣະເຈົ້າຂອງມະນຸດ. ພວກເຮົາທຸກຄົນຕ້ອງການພຣະເຈົ້າ ແຕ່ພວກເຮົາບໍ່ຮູ້ວ່າເຮົາຕ້ອງການ.

### ນຳພາສຶກສາພຣະທັມ

4. ນັກຮຽນຄົນນຶ່ງອ່ານ ພຣະຄັມພີເ ອຊາຢາ 64:1-5 ເມື່ອອ່ານແລ້ວ ຖາມນັກຮຽນວ່າ ຄຳເວົ້ານີ້ມີຄວາມໝາຍຢ່າງໃດ? ຢ່າລືມວ່າຄຳວ່າ "ລົງມາ" ໃນຂໍ້ 1 ເປັນກະແຈສຳລັບບົດຮຽນນີ້.

5. ໃຫ້ຄົນນຶ່ງເປີດພຣະຄັມພີໃໝ່ 1ໂກຣິນໂທ 2:9. ແລ້ວອ່ານໃຫ້ດັງໆ ແລ້ວເອົາທຽບໃສ່ກັບ ອຊຢ 64:4 . ເປັນການຍາກຫລາຍ ໃນການຄອງຄອຍການສະເດັດກັບມາຂອງພຣະເຈົ້າ. ໃຫ້ໂອກາດນັກຮຽນໃຫ້ຄວາມເຫັນ. ຫລັງຈາກນັ້ນ ໃຫ້ທັນມາເບິ່ງ ອຊຢ 40:31
6. ເວລາພວກເຮົາຄອງຄອຍພຣະເຈົ້າ ພວກເຮົາເຮັດຫຍັງແດ່? ໃຫ້ຕອບຄົນນຶ່ງຫລືສອງຄົນ. ແລ້ວໃຫ້ທັນມາອ່ານໃນ ຂໍ້ 5-7 ຮວມກັນທຸກຄົນຄິດວ່າເຮັດຫຍັງແດ່? ເບິ່ງຄືວ່າພຣະເຈົ້າຢູ່ໄກ ແຕ່ວ່າພຣະອົງຢູ່ໃກ້ໆແຄ່ເອື້ອມມື ກໍເຖິງ. ພຣະອົງເປັນຜູ້ສ້າງພວກເຮົາ.

7. ບັນລະຍາຍເຖິງການສຳແດງຂອງພຣະເຈົ້າໃຫ້ມະນຸດເຫັນ ໃນຫລາຍວິທີທາງ. ແຕ່ທາງທີ່ຈະແຈ້ງທີ່ສຸດຄືທາງເທສການຄຣິສມາດ. ອ່ານຄາລາເຕັຽ 4:4 ແລະຈື່ງຈຳໄວ້ວ່າ ເມື່ອຄົບກຳນົດແລ້ວ. ກຳນົດທີ່ເອຊາຢາໄດ້ກ່າວໄວ້ ແລະເຕືອນໃຫ້ພວກເຮົາລໍຖ້າ.

8. ກ່ອນອ່ານ 64:8-9 ໃຫ້ແບ່ງຫ້ອງເປັນສອງສ່ວນ. ສ່ວນທີ່ນື່ງໃຫ້ຟັງວ່າ ພຣະຄັມພີເຕືອນວ່າຢ່າງໃດ. ອີກສ່ວນນື່ງໃຫ້ຟັງວ່າ ປະຊາຊົນຮຽກຮ້ອງຕ້ອງການຫຍັງ.

| <u>ພຣະຄັມພີເຕືອນວ່າ:</u> | <u>ປະຊາຊົນຮຽກຮ້ອງ :</u> |
|---|---|
| ພຣະອົງເປັນພຣະບິດາ | ຂໍຢ່າໂກດພວກຂ້າພຣະອົງ |
| ພຣະອົງເປັນຊ່າງປັ້ນດິນ | ຂໍຢ່າຈົດຈຳຄວາມຜິດບາບ |
| ທຸກຄົນເປັນສີພຣະຫັດຂອງພຣະອົງ | |
| ຂ້າພຣະອົງເປັນສີພຣະຫັດຂອງພຣະອົງ | |

ພວກເຮົາເຫັນຄວາມຕ້ອງການຂອງພວກເຮົາແລ້ວແມ່ນບໍ່?

## <u>ນຳມາໃຊ້ໃນຊີວິດປະຈຳວັນ</u>

9. ຫັນມາຫາ ໄຟສາຍທີ່ເຮົາວາງໄວ້ເທິງໂຕະ. ເອົາຖ່ານໃສ່ ແລ້ວໃຕ້ໃຫ້ທຸກຄົນເຫັນ. ເຫມືອນດັ່ງພວກເຮົາທຸກຄົນຕ້ອງການພຣະເຈົ້າ.

10. ທ້າທາຍໃຫ້ທຸກຄົນເຫັນວ່າ ມະນຸດຢູ່ໃນຄວາມມືດ ແລະຕ້ອງການແສງສວ່າງຈາກພຣະເຢຊູ. ຄວາມຕ້ອງການຂອງເຮົາບໍ່ແມ່ນຂຶ້ນຢູ່ກັບຄວາມຮູ້ສຶກ ເທົ່ານັ້ນ ແຕ່ມັນຂຶ້ນຢູ່ກັບການພຽບພ້ອມຂອງເຮົາເອງ. ໂລກນີ້ພຽບພ້ອມທີ່ຈະຕ້ອນຮັບພຣະອົງແລ້ວບໍ່ ພວກເຮົາຕ້ອງນຳຂ່າວນີ້ ໄປສູ່ພວກເຂົາເຈົ້າ.

11. ອະທິຖານປິດ ສາລະພາບວ່າພວກເຮົາຕ້ອງການພຣະເຈົ້າ ແລະພ້ອມກັນໄປນະມັສການພຣະເຈົ້າ.

# ຄໍາແນະນໍາສໍາລັບຄຣູສອນ
# ບົດຮຽນທີ 2
# ຈົ່ງຮັບຂ່າວປະເສີດຈາກພຣະເຈົ້າ

---

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ເອຊາຢາ 40:1-11

ຂໍ້ພຣະຄັມພີສໍາລັບເບື້ອງຫລັງ: ເອຊາຢາ 40:1-11

ຈຸດສໍາຄັນຂອງບົດຮຽນນີ້: ຄຣິສມາດທີ່ແທ້ຈິງນັ້ນແມ່ນຮຽກຮ້ອງໃຫ້ພວກເຮົາ ຕ້ອນຮັບ ແລະຮັບຜິດຊອບ ຕໍ່ຂ່າວປະເສີດຂອງພຣະເຈົ້າ.

ຄໍາຖາມເພື່ອສໍາຣວດ: ທຸກວັນນີ້ ພວກເຮົາມີຂ່າວປະເສີດບໍ່?

ຈຸດປະສົງຂອງບົດນີ້: ເພື່ອຈະສອນໃຫ້ທ່ານທັງຫລາຍ ຮູ້ວ່າຂ່າວປະເສີດຂອງພຣະເຈົ້າ ຄວນຈະມີການຮັບຜິດຊອບ ໃນຊີວິດຂອງພວກເຮົາເອງ.

## ແຜນການສິດສອນ

### ນໍາເຣື່ອງເຂົ້າສູ່ຊີວິດຈິງ

1. ຂຽນຄໍາວ່າ "ຂ່າວດີ" ໃສ່ກະດານ . ຖາມນັກຮຽນໃນຫ້ອງວ່າ ມີຂ່າວດີໃຫມ່ອັນໃດແດ່ ໃນປັດຈຸບັນນີ້ ທີ່ພວກເຮົາຮູ້ຈັກ. ຖ້າບໍ່ມີອັນໃດ ໃຫ້ ຍົກເຣື່ອງຂຶ້ນມາ ການເກີດລູກໃຫມ່, ໄດ້ງານໃຫມ່, ຈົບໂຮງຮຽນ, ສະມາຊິກໃຫມ່ ແລະຕໍ່ໆໄປ.........

2. ບັດນີ້ ຫັນມາຫາພຣະຄັມພີ ແມ່ນໃຜເປັນຜູ້ນໍາຂ່າວດີມາໃຫ້ມະນຸດທັງຫລາຍ. (ລູກາ 2:10) ບອກນັກຮຽນວ່າເຮົາຈະຮຽນເຣື່ອງຂ່າວດີ ສໍາລັບວັນນີ້.

### ນໍາພາສຶກສາພຣະທັມ

3. ອ່ານພຣະຄັມພີ ອຊຢ 40 :1-5 . ບອກໃຫ້ນັກຮຽນຕັ້ງໃຈຟັງ. ພຣະເຈົ້າສັ່ງໃຫ້ຜູ້ທໍານວາຍເລົ້າໂລມຄົນຂອງພຣະອົງຢູ່ໃສ? (61:2-3) ເປັນຫຍັງພຣະເຈົ້າຈຶ່ງສົ່ງຂ່າວດີມາຫາຄົນຂອງພຣະອົງ? ອະທິບາຍວ່າເປັນຫຍັງພວກເຂົາຈຶ່ງ ໄດ້ກາຍໄປເປັນຊະເລີຍ. ຄົນຂອງພຣະເຈົ້າຫລິງເຫັນແຕ່ທາງດຽວທີ່ເປັນຄວາມຫວັງ ແລະກໍາລັງ ຄືພຣະອົງຜູ້ດຽວເທົ່ານັ້ນ, ພວກເຂົາຫັນມາຫາພຣະເຈົ້າ, ແລະເຂົາກໍໄດ້ຮັບປະສົບການຈາກພຣະເຈົ້າ. ພວກເຂົາພົບຄວາມກັບຄວາມຊຸ່ມຊື່ນ ແທນທີ່ຈະພົບຄວາມແຫ້ງແລ້ງເຫມືອນທະເລຊາຍ.

4. ອ່ານພຣະຄັມພີ ອຊຢ 40: 6-8 ໃນໃຈ. ແຕ່ວ່າອ່ານ ອ່ານຂໍ້ 8 ໃຫ້ດັງໆ ອ່ານ ສາມຄັ້ງ. ຖາມ: ພວກເຮົາຈະແນ່ໃຈໄດ້ຢ່າງໃດ ວ່າແມ່ນຂ່າວດີແທ້. ເຕືອນພີ່ນ້ອງວ່າຂ່າວດີນັ້ນບໍ່ແມ່ນມາຈາກມະນຸດ ແຕ່ມາຈາກພຣະເຈົ້າ. ຂ່າວຂອງມະນຸດ ດີຄາວດຽວ ບໍ່ນານກໍເຫືອດຫາຍ ເພາະເຣື່ອແຮງຂອງມະນຸດ ບໍ່ພຽງແລະກໍພຽງຊົ່ວຄາວ. ແຕ່ເຣື່ອແຮງຂອງພຣະເຈົ້າບໍ່ມີມື້ສິ້ນສຸດ.

5. ຖາມ: ຄົນຂອງພຣະເຈົ້າຄວນເຮັດຢ່າງໃດ ເມື່ອເຂົາໄດ້ຍິນຂ່າວປະເສີດແລ້ວ? ອ່ານ ອຊຢ 40:9-10 ແຮງໆ. ແລ້ວໜມາຍ ເຄິ່ງຫ້ອງ ຝ່າຍນຶ່ງໃຫ້ຄົ້ນຄວ້າກ່ຽວກັບຄຳຖາມທີ່ວ່າ:

- ຄົນຂອງພຣະເຈົ້າຈະແບ່ງປັນຂ່າວປະເສີດຢ່າງໃດ?
- ພຣະເຈົ້າສັນຍາວ່າພຣະອົງຈະເຮັດຫຍັງ?

6. ເລືອກເອົາຄົນນຶ່ງ ໃຫ້ອະທິບາຍ ອຊຢ 40:11 ; ພວກເຮົາປຽບເໝືອນຫຍັງ?

## ນຳມາໃຊ້ໃນຊີວິດປະຈຳວັນ

7. ໃຫ້ສລູບ "ຂ່າວປະເສີດ" ທີ່ພຣະເຈົ້າມອບໃຫ້ໃນບົດຮຽນນີ້ ແມ່ນຫຍັງກັນແທ້? ອ່ານຂໍ້ພຣະຄັມພີຕໍ່ໄປນີ້: ລູກາ 2:10-11; ມທ 1:21; ລູກາ 2:16-18; ໃນຂໍ້ຕ່າງໆນີ້ເດມີຄວາມໝາຍຢ່າງໃດ?

8. ອະທິບາຍການຮັບຂ່າວປະເສີດ, ເຊີນພວກເຮົາມາຮັບເອົາ, ພ້ອມໃຈກັນເຊື່ອ, ແລະຊ່ວຍກັນແບ່ງປັນ......... ທ້າທາຍສະມາຊິກໃຫ້ປ່າວປະກາດບອກຄົນທົ່ວໄປໃນເທສການຄຣິສມາດນີ້.

9. ນຳພາອະທິຖານວ່າທຸກຄົນຈະພ້ອມພາກັນປະກາດ. ແລະພ້ອມທີ່ຈະເຂົ້າໄປເຝົ້າພຣະອົງເຈົ້າ.

# <u>ຄຳແນະນຳສຳລັບຄຣູສອນ</u>
# <u>ບົດຮຽນທີ 3</u>
# <u>ຈົ່ງຍິນດີໃນພຣະພອນຂອງພຣະເຈົ້າ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ເອຊາຢາ 61

<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ເອຊາຢາ 61

<u>ຈຸດສຳຄັນຂອງບົດຮຽນນີ້:</u> ການສເລີມສລອງຄຣິສມາດທີ່ແທ້ຈິງນັ້ນແມ່ນຮຽກຮ້ອງໃຫ້ຍອມຮັບແລະຊື່ນຊົມຍິນດີ ໃນພຣະພອນຂອງພຣະເຈົ້າ.

<u>ຄຳຖາມເພື່ອສຳຣວດ:</u> ພຣະເຈົ້າອວຍພຣະພອນທ່ານຢ່າງໃດ?

<u>ຈຸດປະສົງຂອງບົດນີ້:</u> ເພື່ອຮວບຮວມພຣະພອນ ທີ່ເອຊາຢາໄດ້ອະທິບາຍ ແລະໄດ້ລະບຸເສັ້ນທາງຢ່າງຄັກແນ່ແລ້ວວ່າ ລາວໄດ້ຮັບພຣະພອນດ້ວຍມີຄວາມສັມພັນກັບພຣະເຈົ້າ.

## <u>ແຜນການສິດສອນ</u>

## <u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u>

1. ໜູນໃຈນັກຮຽນໃຫ້ເວົ້າອອກມາວ່າປີທີ່ຜ່ານມາ ໄດ້ຮັບພຣະພອນອັນໃດທີ່ດີເລີດ. ໃຫ້ແບ່ງປັນໃຫ້ທຸກຄົນໃນຫ້ອງຟັງດ້ວຍ.

2. ອ່ານ ຢາໂກໂບ 1:17. ບອກໃຫ້ທຸກຄົນຮູ້ວ່າພຣະເຈົ້າຂອງພວກເຮົາເປັນຜູ້ໃຫ້ ແລະອວຍພອນຄົນຂອງພຣະອົງ.

## <u>ນຳພາສຶກສາພຣະທັມ</u>

3. ທ່ານອາດຈະຂຽນ ເປັນຂໍ້ໆ ລົງໄປ ເພື່ອໃຫ້ທຸກຄົນເຫັນວ່າ ບາດກ້າວການສຶກສາວັນນີ້ ຈະເປັນຢ່າງໃດ.
   - ຂ່າວຂອງການເຈີມຜູ້ສືບຕະກຸນ (61:1-3)
   - ປະຊາຊົນທີ່ໄດ້ຮັບພຣະພອນຈາກພຣະເຈົ້າ (61:4-9)
   - ສຽງຮ້ອງຂອບພຣະຄຸນ (61:10-11)

4. ໃຫ້ນັກຮຽນອ່ານ 61:1-3 ເມື່ອອ່ານສຸດແລ້ວໃຫ້ນັກຮຽນຕອບຄຳຖາມຕໍ່ໄປນີ້
   - ຜູ້ທຳນວາຍ ອະທິບາຍຢ່າງໃດໃນຕອນນີ້? (ອອກໄປປະກາດ)
   - ມີຫຍັງອີກແດ່ທີ່ ຜູ້ທຳນວາຍຄວນຈະເຮັດ? (ນຳຂ່າວປະເສີດອອກໄປ, ໄປຫາຜູ້ທີ່ທຸກໂຮ້ເຂັນໃຈ, ປະກາດ ອິສລະພາບ.......)
   - ແມ່ນ ຫຍັງຄືສິ່ງພິເສດທີ່ພຣະເຈົ້າສັນຍາຈະໃຫ້ພຣະພອນ? ຂໍ້ 3

5. ອ່ານເອຊາຢາ 61: 4-9 ອະທິບາຍຫຍໍ້ໆ ແລ້ວກໍໃຫ້ອີກຄົນນຶ່ງອ່ານ ເຢເຣມີຢາ 29:10-14, ຊຶ່ງພຣະທັມຕອນນີ້

ມີຄວາມໝາຍຄຽງຄູ່ກັນໄປ.

61:4 "ກໍ່ສ້າງຄືນໃໝ່"

61:5 "ຄົນຕ່າງຖິ່ນ"

61:6 "ປະໂລຫິດ"

61:7 "ສອງສ່ວນ"

61:8 "ຄວາມຍຸດຕິທັມ"

61:9 "ເຊື້ອສາຍ, ລູກຫລານ"

6. ອ່ານ ອຊຢ 61: 10-11 ວາງຄຳຖາມ ໃຫ້ໂອກາດແກ່ນັກຮຽນເວົ້າ: ແມ່ນຫຍັງຈະເກີດຂຶ້ນ ແກ່ຄົນທີ່ຮັບຮູ້ວ່າ ຕົວເອງໄດ້ຮັບພຣະພອນຈາກພຣະເຈົ້າແລ້ວ?

7. ໃນຂໍ້ 11 ຜູ້ທຳນວາຍກ່າວ່າ ພຣະອົງຊົງຮັກສາຄຳສັນຍາຂອງພຣະອົງ ແລະພວກເຮົາກໍຄວນຮັກສາຄຳສັນຍາ ຂອງພວກເຮົາ ເໝືອນກັນ.

## <u>ນຳມາໃຊ້ໃນຊີວິດປະຈຳວັນ</u>

8. ເຊີນນັກຮຽນຄົນນຶ່ງເປີດໄປຫາພຣະທັມ ເພງສັຣເສີນ ບົດທີ 100 ໃນບົດນີ້ ຈະເວົ້າເຖິງການຂອບພຣະຄຸນພຣະເຈົ້າ ໃນພຣະພອນຂອງພຣະອົງ.

9, ຊີ້ໃຫ້ເຫັນວ່າພຣະເຈົ້າອວຍພຣະພອນອັບຣາຮາມຢ່າງໃດ. ປຖກ 12:2 ແລະ ໃນ ປຖກ 22:17 ພຣະເຈົ້າຊົງ ຮັກສາຄຳສັນຍາຂອງພຣະອົງຢ່າງໃດ,

10. ນຳພາອະທິຖານໃນພຣະພອນທີ່ໄດ້ຮັບຜ່ານມາ. ແລະພ້ອມທີ່ຈະເຂົ້າໄປເຝົ້າພຣະອົງເຈົ້າ.

# ບົດແນະນຳການສິດສອນ
# ບົດຮຽນທີ 4
# ເທສການວັນເກີດຂອງພຣະກຸມມານ

---

| | |
|---|---|
| ຂໍ້ພຣະຄັມພີສຳລັບບົດຮຽນ: | ເອຊາຢາ 9:1-7 |
| ຂໍ້ພຣະຄັມພີສຳລັບເບື້ອງຫລັງ: | ເອຊາຢາ 8:21-9:7 |
| ຈຸດສຳຄັນຂອງບົດຮຽນນີ້: | ເທສການວັນຄຣິສມາດເປັນວັນຮຽກຮ້ອງໃຫ້ລະນຶກເຖິງການສະເດັດມາຂອງ ພຣະຜູ້ເປັນເຈົ້າທີ່ມາບັງເກີດໃນຄາບຂອງພຣະເຢຊູຄຣິດ. |
| ຄຳຖາມເພື່ອການສຳຫລວດ: | ກຸມມານນີ້ມີຄວາມສຳຄັນຢ່າງໃດ? |
| ຈຸດປະສົງຂອງບົດຮຽນນີ້: | ປະກາດບອກເຖິງຄວາມໝາຍຂອງການມາບັງເກີດຂອງພຣະຄຣິດ |

## ແຜນການສິດສອນ

### ຊີວິດສະພາບຕົວຈິງ

1. ໃຫ້ເຕືອນພວກລູກຫ້ອງກ່ຽວກັບການໂຄສະນາສິນຄ້າຂອງເທສການວັນຄຣິສມາດ, ບາງຄັ້ງມັນຈະຊັກຊວນໃຫ້ ພວກເຮົາຫລົງລືມຄວາມໝາຍຂອງຄຣິສມາດ ທີ່ພຣະກຸມມານໄດ້ສະເດັດມາບັງເກີດໃນບ້ານເບດເລເຮັມ ໃນ 2000 ປີ ທີ່ຜ່ານມາ. ໃຫ້ລູກຫ້ອງເລົ່າເຖິງຄວາມຮູ້ສຶກໃນຂະນະທີ່ພວກເຂົາໄດ້ອູ້ມລູກນ້ອຍ ຫລືຫລານນ້ອຍຂອງ ພວກເຂົາ. ຊີ້ບອກໃຫ້ລູກຫ້ອງເຫັນວ່າ ໃນຂະນະພຣະກຸມມານສະເດັດມາບັງເກີດ ອາດຈະມີຄົນຈຳນວນນ້ອຍທີ່ ໄປເຝົ້າເບິ່ງ ແລະອາດມີບາງຄົນໄດ້ອູ້ມພຣະອົງຢູ່ໃນອ້ອມກອດຂອງພວກເຂົາ. ການມາບັງເກີດຂອງພຣະກຸມ ມານ ເຢຊູໄດ້ຈູງໃຈຜູ້ຄົນທີ່ລໍຄອຍພຣະສັນຍາຂອງພຣະຜູ້ເປັນເຈົ້າ.

2. ອະທິບາຍຂໍ້ພຣະຄັມພີຂອງວັນນີ້. ໃຫ້ລູກຫ້ອງຕື່ມໃສ່ໃນຂໍ້ຄວາມຂອງພຣະຄັມພີໃຫ້ສົມບູນ.
- ປະຊາຊົນຜູ້ດຳເນີນຢູ່ໃນຄວາມມືດ......
- ເດັກນ້ອຍຜູ້ນຶ່ງໄດ້ເກີດມາໃຫ້ເຮົາແລ້ວ......
- ພຣະຣາຊອານາຈັກຂອງພຣະອົງ......
- ພຣະນາມຂອງພຣະອົງ......

### ສຶກສາບົດຮຽນ

3. ໃຫ້ສຶກສາຂໍ້ຄວາມໃນ "ປະຫວັດສາດເບື້ອງຫລັງ" ໃນ ຄູ່ມືຂອງລູກຫ້ອງ. ໃຫ້ບັນລະຍາຍເຖິງປະຫວັດສາດຫຍໍ້ໆ ຂອງການເປັນມາຣະຫວ່າງຄວາມສັມພັນຂອງໄພ່ພົນຂອງພຣະຜູ້ເປັນເຈົ້າແລະອານາຈັກອັດຊີເຣັຽ.

4. ນຳພາໃຫ້ລູກຫ້ອງອ່ານເອຊາຢາ 9:1-2 ແລະໃຫ້ສົນທະນາໃນຄຳຖາມຕໍ່ໄປນີ້:
- ສະພາບການຂອງປະຊາຊົນໃນຂະນະນັ້ນເປັນຢ່າງໃດ?
- ຄຳວ່າດຳເນີນຢູ່ໃນຄວາມມືດມີຄວາມໝາຍວ່າຢ່າງໃດ?
- ແມ່ນຜູ້ໃດຄືແສງສວ່າງຢ່າງຫລວງຫລາຍ?
- ແສງສວ່າງນີ້ຈະເຮັດໃຫ້ໂລກມີຄວາມແຕກຕ່າງຢ່າງໃດ?

5. ເຊື້ອເຊີນໃຫ້ລູກຫ້ອງອ່ານ ເອຊາຢາ 9:3-5 ແລະ ສັງເກດຂໍ້ຄວາມໃນພຣະທັມຕອນນັ້ນ. ໃຫ້ຖາມວ່າ, ການສະເດັດມາຂອງພຣະຄຣິດນັ້ນ ໄດ້ເຮັດໃຫ້ໄພ່ພົນຂອງພຣະຜູ້ເປັນເຈົ້າມີຄວາມແຕກຕ່າງອັນໃດ? ໃຫ້ແບ່ງປັນຂໍ້ຄວາມຈາກຄູ່ມືຂອງລູກຫ້ອງ.

6. ໃຫ້ສະແດງຄວາມເຫັນກ່ຽວກັບການມາບັງເກີດຂອງພຣະຄຣິດໄດ້ນຳການປ່ຽນແປງອັນໃຫຍ່ຫລວງມາສູ່ໂລກນີ້. ເຊື້ອເຊີນໃຫ້ລູກຫ້ອງສະແດງຄວາມເຫັນວ່າໂລກນີ້ມີການປ່ຽນແປງອັນໃດແດ່ໃນຊີວິດຂອງເຂົາ (ເຊັ່ນ ເຕົາອົບດ້ວຍຄື້ນວິທະຍຸຄວາມຖີ່ສູງ Microwave oven, ເຄື່ອງໃຊ້ຄອມພິວເຕີ, ອາດຊີງຂອງເສື້ອຜ້າແລະອື່ນໆ).

ທ້າທາຍ

ໃຫ້ລູກຫ້ອງຈົດຈໍ່ໃສ່ການປ່ຽນແປງທີ່ພຣະຄຣິດໄດ້ນຳມາໃຫ້ມະນຸດຜູ້ທີ່ຕ້ອງການພຣະອົງ. ໃຫ້ເນັ້ນເຖິງການປ່ຽນແປງທີ່ພວກເຮົາມີປະສົບການກັບການປະຖິດ ແລະການສ້າງສາຂອງມະນຸດ ເມື່ອສົມທຽບກັບການປ່ຽນແປງທີ່ພຣະຄຣິດໄດ້ນຳມາໃຫ້ພວກເຮົານັ້ນ.

7. ເຊື້ອເຊີນໃຫ້ລູກຫ້ອງອ່ານເອຊາຢາ 9:6-7. ໃຫ້ຕັ້ງຄຳຖາມດັ່ງຕໍ່ໄປນີ້:

- ພຣະກຸມມານແລະການປົກຄອງມີຄວາມສັມພັນກັນຢ່າງໃດ?
- ພຣະອົງມີນາມຊື່ອັນໃດແດ່?
- ພຣະອົງຈະປົກຄອງດົນປານໃດ?
- ມີຄຳອັນໃດທີ່ຈະບັນລະຍາຍເຖິງລັກສະນະຂອງຣາຊອານາຈັກຂອງພຣະອົງ?

8. ໃຫ້ສຶກສາຫົວຂໍ້ກ່ຽວກັບ "ພຣະເມຊີອາ" ໃນຄູ່ມືຂອງລູກຫ້ອງ. ຮ້ອງຂໍໃຫ້ລູກຫ້ອງອ່ານຂໍ້ຄວາມນັ້ນໃຫ້ດັງໆ. ໃຫ້ບັນລະຍາຍເຣື່ອງກ່ຽວກັບ ພຣະກຸມມານ, ຜູ້ທີ່ຊົງສັນຍາໄວ້, ພຣະເມຊີອາ, ໄດ້ສະເດັດມາ!

ຫມູນໃຊ້ໃນການກະທຳ

9. ໃຫ້ລູກຫ້ອງຜູ້ນຶ່ງອ່ານ ພຣະທັມລູກາທີ່ກ່ຽວກັບເຣື່ອງລາວຄຣິສມາດດັງໆ (ລູກາ 2:1-20). ຕໍ່ມາໃຫ້ອ່ານຂໍ້ທີ 20 ເພີ້ມຂຶ້ນອີກດັງໆ. ໃຫ້ຖາມວ່າ, ພຣະທັມຂໍ້ນີ້ໄດ້ຊີ້ໃຫ້ພວກເຮົາເຫັນຫຍັງແດ່ ພວກລ້ຽງແກະໄດ້ຕອບສນອງຕໍ່ການສະເດັດມາບັງເກີດຂອງພຣະກຸມມານຢ່າງໃດ? ຊີ້ເນັ້ນໃຫ້ພວກເຂົາເຫັນວ່າ ພວກລ້ຽງແກະ ຍ້ອງຍໍສັຣເສີນ ການສະເດັດມາບັງເກີດຂອງພຣະກຸມມານ. ພວກເຮົາຕ້ອງຍ້ອງຍໍສັຣເສີນ ການສະເດັດມາບັງເກີດຂອງພຣະກຸມມານເຊັ່ນກັນ. ເຊື້ອເຊີນໃຫ້ຜູ້ອາສາສມັກແບ່ງປັນການປ່ຽນແປງໃນຊີວິດຂອງເຂົາ ເພາະວ່າການສະເດັດມາບັງເກີດຂອງພຣະກຸມມານໃນບ້ານເບດເລເຮັມ.

10. ປິດຫ້ອງຮຽນດ້ວຍການອ້ອນວອນ, ໃຫ້ຕັດສິນໃຈຍ້ອງຍໍສັຣເສີນການສະເດັດມາບັງເກີດຂອງພຣະກຸມມານ.

## ບົດແນະນຳການສິດສອນ
## ບົດຮຽນທີ 5
## ໄວ້ວາງໃຈໃນພຣະສັນຍາຂອງພຣະຜູ້ເປັນເຈົ້າ

---

ຂໍ້ພຣະຄັມພີສຳລັບບົດຮຽນ: ເອຊາຢາ 62
ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ເອຊາຢາ 62
ຈຸດສຳຄັນຂອງບົດຮຽນນີ້: ການສເລີມສລອງເທສການວັນຄຣິສມາດອັນແທ້ຈິງ ແມ່ນການໄວ້ວາງໃຈໃນພຣະສັນຍາຂອງພຣະຜູ້ເປັນເຈົ້າທີ່ໃຫ້ຄວາມຫວັງໃນອະນາຄົດ.
ຄຳຖາມເພື່ອການສຳຫລວດ: ແມ່ນຫຍັງທີ່ຈະຄ້ຳຊູອະນາຄົດໄດ້?
ຈຸດປະສົງຂອງບົດຮຽນນີ້: ບັນລະຍາຍເຖິງວິທີທາງການປະເຊີນກັບອະນາຄົດດ້ວຍຄວາມໝັ້ນໃຈ.

### ແຜນການສິດສອນ

ຊີວິດສະພາບຕົວຈິງ

1. ໃຫ້ຕັ້ງຂໍ້ສັງເກດການວ່າໃນລຸ້ນພວກເຮົານີ້ ພວກເຮົາໄດ້ເຫັນມີການປ່ຽນແປງຫລາຍຢ່າງຈຶ່ງເປັນຄຳຖາມຕໍ່ພວກເຮົາເຖິງຄວາມໝັ້ນຄົງຂອງການຄອງຊີບ ແລະຄວາມປອດພັຍຂອງສະຖານະການຂອງໂລກ. ພວກເຮົາອາດຈະຈຳໄດ້ຣະບົບສັງຄົມນິຍົມແຕກແຍກແລະອຳນາດຂອງໂຊວຽດອ່ອນລົງ, ສົງຄາມທະເລຊາຍ, ແລະການຂັດແຍ່ງກັນໃນຕາເວັນອອກກາງ. ແນ່ນອນໃຜກໍຈຳໄດ້ ເຫດການໃນວັນທີ 11 ເດືອນກັນຍາ ຈຶ່ງເຮັດໃຫ້ພວກເຮົາລະນຶກໄດ້ວ່າ ພວກເຮົາບໍ່ສາມາດເພິ່ງໃນກຳລັງຂອງພວກເຮົາເອງໄດ້ໃນເຫດການຂອງອະນາຄົດ.

2. ໃຫ້ຕັ້ງຄຳຖາມວ່າ ພວກເຮົາຈະປະເຊີນກັບອະນາຄົດດ້ວຍຄວາມໝັ້ນໃຈໄດ້ຢ່າງໃດ?

3. ເຊື້ອເຊີນໃຫ້ລູກຫ້ອງເລົ່າເຖິງເຣື່ອງພຣະຜູ້ເປັນເຈົ້າໄດ້ໃຫ້ພຣະສັນຍາຂອງພຣະອົງສຳເຣັດໃນພຣະຄັມພີ. ຕຽມພ້ອມທີ່ຈະເລົ່າເຖິງເຫດການທີ່ເກີດຂຶ້ນອັນສັ້ນໆ (ພຣະຜູ້ເປັນເຈົ້າໄດ້ໃຫ້ອັບຣາຮາມມີເຊື້ອສາຍ, ເຄື່ອງໝາຍເປັນສັນຍານຮຸ້ງຢູ່ເທິງຟ້າສະແດງໃຫ້ຮັບຮູ້ວ່າພຣະຜູ້ເປັນເຈົ້າຈະບໍ່ທຳລາຍໂລກດ້ວຍນ້ຳ, ແລະພຣະສັນຍາ ການມາບັງເກີດຂອງພຣະເຢຊູເພື່ອປະທານຄວາມລອດພົ້ນໃຫ້ມະນຸສໂລກ ).

4. ຈົ່ງຂຽນຄຳວ່າ <u>ພຣະຜູ້ເປັນເຈົ້າຊົງສັດຊື່!</u> ໃສ່ເທິງກະດານ. ໃຫ້ສົນທະນາກ່ຽວກັບການສເລີມສລອງເທສການວັນຄຣິສມາດດ້ວຍໃຈຈິງຈະຕ້ອງຮ່ວມທັງການໄວ້ວາງໃຈເຊື່ອໃນພຣະສັນຍາຂອງພຣະຜູ້ເປັນເຈົ້າໃນອະນາຄົດ.

ສຶກສາບົດຮຽນ

5. ຢູ່ໃຕ້ຄຳວ່າ <u>ພຣະຜູ້ເປັນເຈົ້າຊົງສັດຊື່!</u> ໃຫ້ຫົວຂໍ້ຂອງບົດຮຽນຈາກຄູ່ມືຂອງລູກຫ້ອງດັ່ງຕໍ່ໄປນີ້:
- ນາມຊື່ໃໝ່ສຳລັບເຢຣູຊາເລັມແລະຢູດາ (62:1-5)
- ຄຳອ້ອນວອນຂອງຄົນຍາມຢູ່ເທິງກຳແພງເມືອງເຢຣູຊາເລັມ (62:6-9)
- ຜູ້ໃຫ້ຄຳສັນຍາໄດ້ສະເດັດມາພ້ອມກັບລາງວັນ (62:10-12)

6. ໃຫ້ແບ່ງປັນເຣື່ອງລາວໃນ <u>ປະຫວັດສາດເບື້ອງຫລັງ</u> ຈາກຄູ່ມືຂອງລູກຫ້ອງ ເພື່ອໃຫ້ລູກຫ້ອງເຂົ້າໃຈເຖິງປະຫວັດສາດເບື້ອງຫລັງຂອງພຣະທັມ ເອຊາຢາ ບົດທີ 62. ຕັ້ງຂໍ້ສັງເກດໃຫ້ເຫັນວ່າປະຊາຊົນຕ້ອງການຂ່າວສານເຣື່ອງຄວາມຫວັງທີ່ມີພື້ນຖານຂອງການໄວ້ວາງໃຈເຊື່ອໃນພຣະສັນຍາຂອງພຣະຜູ້ເປັນເຈົ້າ.

7. ເຊື້ອເຊີນໃຫ້ລູກຫ້ອງອ່ານເອຊາຢາ 62:1-5 ດັງໆ. ໃຫ້ຕັ້ງຄຳຖາມດັ່ງຕໍ່ໄປນີ້:

- ຜູ້ປະກາດພຣະທັມປະກາດວ່າລາວຈະເຮັດຫຍັງໃນຂໍ້ທີ 1?
- ແມ່ນຄຳສັນຍາອັນໃດໃນຂໍ້ທີ 2-3?
- ນາມຊື່ເກົ່າທີ່ຈະຖືກປ່ຽນໃຫມ່ແມ່ນຫຍັງ ແລະນາມຊື່ໃຫມ່ທີ່ຈະນຳມາທົດແທນນັ້ນແມ່ນຫຍັງ ?
- ນາມຊື່ໃຫມ່ນັ້ນມີຄວາມຫມາຍວ່າຢ່າງໃດ?
- ຄຳອຸປມາທີ່ໃຊ້ບັນລະຍາຍເຖິງຄວາມສັມພັນລະຫວ່າງພຣະຜູ້ເປັນເຈົ້າກັບໄພ່ພົນຂອງພຣະອົງໃນຂໍ້ທີ5 ນັ້ນແມ່ນຫຍັງ?

8. ໃຫ້ອ່ານພຣະທັມ ເອຊາຢາ 62:6-9 ດັງໆ. ໃຫ້ແບ່ງປັນບົດຮຽນຈາກຄູ່ມືຂອງລູກຫ້ອງແລ້ວຕັ້ງຄຳຖາມດັ່ງຕໍ່ໄປນີ້: ຖ້າພຣະອົງຊົງ ດີແທ້ແລະມີອຳນາດແທ້, ເປັນຫຍັງພຣະອົງຍັງຈຳເປັນຕ້ອງໃຫ້ອ້ອນວອນຫາ ພຣະອົງຈຶ່ງຈະມາປິ່ນປົວຄວາມເຈັບປວດຂອງມະນຸດໃຫ້ຫາຍດີ ແລະເຮັດໃຫ້ຄວາມບໍ່ດີເປັນຄວາມດີ?

9. ໃຫ້ນຳລູກຫ້ອງໄປສຶກສາຂໍ້ 8-9. ຕັ້ງຄຳຖາມວ່າ ມີຫຍັງແດ່ທີ່ພຣະຜູ້ເປັນເຈົ້າໄດ້ທຳສັນຍາຢ່າງຫນັກແຫນ້ນ?

10. ຮ້ອງຂໍໃຫ້ລູກຫ້ອງຜູ້ນຶ່ງອ່ານ ບົດທີ 62:10-12 ດັງໆ. ຊີ້ໃຫ້ລູກຫ້ອງເຫັນວ່າ ຜູ້ປະກາດພຣະທັມໄດ້ມອບກິຈການໃຫ້ໄພ່ພົນຂອງພຣະຜູ້ເປັນເຈົ້າ. ການຊ່ອຍກູ້ໄດ້ນຳໃຫ້ມີການສເລີມສລອງ, ແລະໄພ່ພົນຂອງພຣະຜູ້ເປັນເຈົ້າຈະໄດ້ສເລີມສລອງດ້ວຍຄວາມປິຕິຍິນດີອີກຄັ້ງນຶ່ງ.

<u>ຫມູນໃຊ້ໃນການກະທຳ</u>

11. ໃຫ້ນຳພາລູກຫ້ອງສົນທະນາບົດຮຽນຕາມແຕ່ລະຫົວຂໍ້ຈາກຄູ່ມືຂອງລູກຫ້ອງ.

12. ໃຫ້ຂໍ້ສັງເກດການວ່າ ການໄວ້ວາງໃຈເຊື່ອໃນອົງພຣະຜູ້ເປັນເຈົ້າ ຝາກອະນາຄົດໄວ້ກັບພຣະອົງ ເຫມືອນກັບວ່າພວກເຮົາຍ່າງອອກຈາກຫ້ອງຮຽນ ເພື່ອເດີນເຂົ້າໄປຫ້ອງນະມັສການ. ເມື່ອເດີນຕາມຮ່ອມທາງຢູ່ໃນໂບດບາງທີອາດຈະມີຕັ່ງນັ່ງຫລືໂຕະຕັ້ງໄວ້ກີດທາງຂອງພວກເຮົາຍ່າງຜ່ານໄປກໍໄດ້. ແຕ່ເຖິງຢ່າງໃດພວກເຮົາກໍຮູ້ທາງນັ້ນດີ ເພາະວ່າພວກເຮົາເຄີຍຜ່ານທາງເສັ້ນນັ້ນມາຢູ່ຕລອດ. ເຊັ່ນດຽວກັນກັບພວກເຮົາຈະປະເຊີນກັບອະນາຄົດກໍດີພວກເຮົາເຄີຍເດີນກັບພຣະຜູ້ເປັນເຈົ້າມາແລ້ວ ພຣະອົງກໍຈະພາພວກເຮົາເດີນໃນທາງທີ່ພວກເຮົາເຄີຍປະເຊີນມາເຫມືອນດັ່ງແຕ່ກ່ອນ. ຈົ່ງໄວ້ວາງໃຈເຊື່ອໃນອົງພຣະຜູ້ເປັນເຈົ້າແລະເດີນດ້ວຍຄວາມຫມັ້ນໃຈ.

# ບົດແນະນຳການສິດສອນ
# ບົດຮຽນທີ 6
# ແສງສວ່າງໄປເຖິງປະຊາຊາດ

---

<u>ຂໍ້ພຣະຄັມພີສຳລັບບົດຮຽນ:</u> ເອຊາຢາ 42:1-4; 49:1-6; 50:4-11

<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ເອຊາຢາ 42:1-9; 49:1-6; 50:4-11

<u>ຈຸດສຳຄັນຂອງບົດຮຽນນີ້:</u> ຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າໄດ້ທຳຕາມພຣະບັນຊາ ຄືໄດ້ນຳຄວາມຍຸດຕິທັມ ແລະ ຄວາມລອດພົ້ນມາສູ່ໂລກມະນຸດຊຶ່ງໄດ້ສຳເຣັດຢ່າງສົມບູນໃນພຣະເຢຊູ.

<u>ຄຳຖາມເພື່ອການສຳຫລວດ:</u> ພວກເຮົາຈະເພິ່ງຜູ້ໃດຫລືສິ່ງໃດ ທີ່ຈະມາຊ່ວຍມວນມະນຸດໃນໂລກຂອງເຮົານີ້ໄດ້?

<u>ຈຸດປະສົງຂອງບົດຮຽນນີ້:</u> ອະທິບາຍໃຫ້ເຫັນວ່າພຣະເຢຊູຊົງສຳເຣັດຕາມພຣະບັນຊາ ໂດຍການເປັນຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າ ແລະຊີ້ໃຫ້ເຫັນຄວາມຈິງເພື່ອການມອບໝາຍທີ່ຂ້າພະເຈົ້າໄດ້ຮັບແລະຄຣິສຕະຈັກທີ່ຂ້າພະເຈົ້າສັງກັດຢູ່ດ້ວຍ.

## ແຜນການສິດສອນ

<u>ຊີວິດສະພາບຕົວຈິງ</u>

1. ໃຫ້ຂຽນຫົວຂໍ້ຂອງບົດຮຽນຊຶ່ງມີຊື່ວ່າ "ເພງຂອງຜູ້ຮັບໃຊ້" ໃສ່ກະດານດັ່ງຕໍ່ໄປນີ້:

- ຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າ (42:1-4)
- ຜູ້ຮັບໃຊ້ເປັນແສງສວ່າງໄປເຖິງປະຊາຊາດ (49:1-6)
- ຜູ້ຮັບໃຊ້ເປັນຜູ້ເຊື່ອຟັງ (50:4-11)

໒. ໃຫ້ລູກຫ້ອງພິຈາຣະນາຂໍ້ຄວາມດັ່ງກ່າວນີ້ ຄຣິສຕຽນຫລາຍຄົນເຫັນວ່ານີ້ຄືຕົວຢ່າງຂອງຄວາມດີເລີດ:

ກ. ນັກເທດທີ່ມີຄວາມສາມາດດຶງດູດຈິດໃຈຜູ້ຟັງໃນການປາກເວົ້າ.

ຂ. ນາຍຄູຣສອນໃນໂຮງຮຽນວັນອາທິດທີ່ສາມາດດຶງດູດລູກຫ້ອງຫລາຍໃນຫ້ອງ.

ຄ. ຜູ້ອຳນວຍການຂອງຄະນະມັກຄະນາຍົກແລະຍັງເປັນຄະນະກັມມະການຂອງອົງການຈັດຕັ້ງຕ່າງໆໃນສັງຄົມອີກດ້ວຍ.

ງ. ນັກຮ້ອງດ່ຽວທີ່ມີສຽງສະອອນນຳພາໃນການນະມັສການ.

ຈ. ຜູ້ອາສາສມັກໃນບ້ານພັກຂອງຄົນເຈັບທີ່ໄປລໍຖ້າໃນວາຣະສຸດທ້າຍ.

ໃຫ້ເຕືອນລູກຫ້ອງວ່າ ແຕ່ລະຄົນນັ້ນມີຄວາມດີເລີດໝົດໃນສາຍພຣະເນດຂອງພຣະຜູ້ເປັນເຈົ້າ ຖ້າພວກເຂົາຫາກຮັບໃຊ້ແລະວາງຕົວເປັນຜູ້ຮັບໃຊ້ດ້ວຍຄວາມຖ່ອມໃຈ. ຊີ້ໃຫ້ລູກຫ້ອງເຫັນວ່າ ພຣະເຢຊູຊົງລ້າງຕີນພວກສາວົກຂອງພຣະອົງ (ໂຢຮັນ ບົດທີ 13).

ໃຫ້ຕັ້ງຄຳຖາມເພື່ອຈະນຳໄປສູ່ການສົນທະນາດັ່ງຂໍ້ຄວາມຕໍ່ໄປນີ້:

(1) ທ່ານຄິດວ່າ ເປັນຫຍັງພວກຢິວຈຶ່ງເບິ່ງຂ້າມວ່າ ພຣະເຢຊູບໍ່ແມ່ນພຣະເມຊີອາ? (ພວກເຂົາບໍ່ໄດ້ຊອກຫາພຣະເມຊີອາ ຜູ້ຊົງເປັນຜູ້ຮັບໃຊ້.)

(໒) ເປັນຫຍັງພວກເຂົາຈຶ່ງບໍ່ໃຊ້ "ເພງຂອງຜູ້ຮັບໃຊ້" ສາມບົດນີ້ມາທຽບໃສ່ພຣະເມຊີອາ? (ພວກເຂົາເຫັນຄົນອື່ນ

ໄດ້ຮັບໜ້າທີ່ນີ້ແລ້ວ.)

(3) ເປັນຫຍັງຈຶ່ງເປັນການຍາກແທ້ທີ່ພວກເຮົາຈະຮັບໜ້າທີ່ເປັນຜູ້ຮັບໃຊ້ໃນສມັຍນີ້? (ພວກເຮົາບໍ່ຮູ້ຈັກວັດແທກຄວາມດີເລີດອັນແທ້ຈິງນັ້ນແມ່ນອັນໃດ.)

<u>ສຶກສາບົດຮຽນ</u>

3. ໃຫ້ແບ່ງລູກຫ້ອງເປັນສາມກຸ່ມ. ແຕ່ລະກຸ່ມໃຫ້ເອົາຫົວຂໍ້ນຶ່ງຂອງ "ເພງຂອງຜູ້ຮັບໃຊ້" ຈາກບົດຮຽນນີ້. ໃຫ້ແຕ່ລະກຸ່ມສົນທະນາໃນຄຳຖາມດັ່ງຕໍ່ໄປນີ້:
   ກ. ລັກສະນະຂອງຜູ້ຮັບໃຊ້ໃນຫົວຂໍ້ນີ້ເປັນແນວໃດ?
   ຂ. ພຣະຄຣິດໄດ້ສຳເຣັດຕາມລັກສະນະທີ່ກ່າວມານີ້ໄດ້ຢ່າງໃດ?
   ຄ. ລັກສະນະທີ່ກ່າວມານີ້ມີຜົນສະທ້ອນໃຫ້ຊີວິດຂອງທ່ານຢ່າງໃດ?

4. ຫລັງຈາກສິບຫ້ານາທີແລ້ວ ໃຫ້ນຳລູກຫ້ອງເຂົ້າມາຮ່ວມກັນ. ໃຫ້ພວກເຂົາສເນີຂໍ້ຄວາມຕາມທີ່ໄດ້ສົນທະນາກັນຈາກຄູ່ມືຂອງລູກຫ້ອງນັ້ນ. ໃຫ້ລູກຫ້ອງຕອບຄຳຖາມດັ່ງຕໍ່ໄປນີ້:
   <u>ແປກໃຈບໍ່ ຕາມຂໍ້ຄວາມຕ່າງໆທີ່ກ່າວມານີ້ ມີແຕ່ພຣະເຢຊູເທົ່ານັ້ນຈະສຳເຣັດໄດ້ຕາມຄຳທຳນວາຍຂອງຜູ້ປະກາດພຣະທັມເອຊາຢາ?</u>

5. ຊີ້ໃຫ້ລູກຫ້ອງເຫັນວ່າ ຜູ້ປະກາດພຣະທັມອາດຈະເຫັນນິມິດໃນການທຳນວາຍ ການສະເດັດມາຂອງພຣະເມຊີອາ, ລາວອາດຈະບໍ່ລະນຶກໄດ້ວ່າຈະສຳເຣັດໃນພຣະເຢຊູ. ໃຫ້ລູກຫ້ອງສົນທະນາຈາກຄຳຖາມຂອງຄູ່ມືຂອງລູກຫ້ອງໃນຄຳຖາມດັ່ງຕໍ່ໄປນີ້: <u>ທ່ານຄິດວ່າ ເອຊາຢາ ຜູ້ປະກາດພຣະທັມເອງ ເຂົ້າໃຈໃນພຣະທັມກ່ຽວກັບ ຜູ້ຮັບໃຊ້ທີ່ໄດ້ຮັບຄວາມທົນທຸກທໍຣະມານຫລາຍປານໃດ?</u>

6. ເຊື້ອເຊີນໃຫ້ລູກຫ້ອງສົນທະນາເຖິງລັກສະນະຂອງຜູ້ຮັບໃຊ້ ແລະຖາມພວກເຂົາວ່າ ລັກສະນະຕອນໃດທີ່ປະທັບໃຈພວກເຂົາຫລາຍທີ່ສຸດ. ໃຫ້ສົນທະນາພຣະທັມເອຊາຢາ 49:6 ແລະ50:10 ຈາກຄູ່ມືຂອງລູກຫ້ອງ.

<u>ໜູນໃຊ້ໃນການກະທຳ</u>

7. ໃຫ້ລູກຫ້ອງອ່ານຂໍ້ຄວາມໃນເພງ " ຂ້ານ້ອຍປະຫລາດໃຈ " ຈາກປຶ້ມເພງ. ໃຫ້ຖາມລູກຫ້ອງວ່າຂໍ້ຄວາມອັນໃດໃນເພງນັ້ນທີ່ປະທັບໃຈພວກເຂົາຫລາຍ ເພື່ອໃຫ້ພວກເຂົາມີການປ່ຽນແປງໃນຊີວິດຂອງພວກເຂົາ. ໃຫ້ອະທິຖານປິດດ້ວຍເພງດັ່ງກ່າວ.

# <u>ຄຳແນະນຳສຳລັບຄຣູສອນ</u>

# <u>ບົດຮຽນທີ 7</u>

# <u>ຖືກປົ່ນປົວໃຫ້ດີຍ້ອນການຕົບຕີທີ່ທ່ານຮັບເອົາ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ເອຊາຢາ 53:1-12
<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> ເອຊາຢາ 52:13-- 53:12
<u>ຈຸດສຳຄັນຂອງບົດຮຽນນີ້:</u> ພຣະເຈົ້າຊົງປະທານຄວາມລອດພົ້ນແກ່ມະນຸດຜ່ານພຣະເຢຊູຄຣິດ ຜູ້ຮັບໃຊ້ຜູ້ທີ່ໄດ້ທົນທຸກຕໍ່ຄວາມເຈັບປວດນາໆຊະນິດ.

<u>ຄຳຖາມເພື່ອການສຳຫລວດ:</u> ພຣະເຈົ້າຊົງກະທຳສິ່ງທີ່ກົງກັນຂ້າມກັບຄວາມເຂົ້າໃຈຂອງມະນຸດຢ່າງໃດ?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອຕອບຮັບພຣະຄຸນຂອງພຣະເຈົ້າໂດຍການເຊື່ອໃນພຣະຄຣິດ ຜູ້ຮັບໃຊ້ຜູ້ທີ່ໄດ້ທົນທຸກຕໍ່ຄວາມເຈັບປວດ.

## <u>ແຜນສຳລັບການສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u> (ໃຊ້ເວລາ 5 ນາທີ)

1. ເລີ່ມການສຶກສາພຣະທັມໂດຍການຖາມນັກຮຽນວ່າ: ມີຫຍັງແດ່ຈາກບົດຮຽນທີ່ໄດ້ຮຽນກັນໃນອາທິດທີ່ຜ່ານມາທີ່ສ້າງຄວາມປະທັບໃຈກັບພວກເຂົາເຈົ້າ. ໃຫ້ໂອກາດເພື່ອຄຳພະຍານສັ້ນ ແລະການຂໍໃຫ້ອະທິຖານເພື່ອ.

2. ຂໍໃຫ້ນັກຮຽນອ່ານຫລືຮ້ອງເພງ "ໄມ້ກາງແຂນໂບຮານ." ໃຫ້ນັກຮຽນອີກຜູ້ນຶ່ງອ່ານພຣະທັມມັດທາຍ 26:67-75. ຫລັງຈາກການອ່ານ ແລະການຮ້ອງເພງແລ້ວຖາມນັກຮຽນວ່າ: ພວກທ່ານຄິດວ່າທ່ານເປໂຕຈະໃຫ້ຄວາມເຫັນແນວໃດແດ່ ໃນການທີ່ເພິ່ນໄດ້ປະຕິເສດພຣະເຢຊູຄຣິດ? ຄຳຕອບຈະຕ້ອງຢູ່ໃນທຳນອງນີ້: ເປໂຕເກີດຄວາມຢ້ານກົວ ແລະອາດຈະລະອາຍເຣື່ອງໄມ້ກາງແຂນ. ທ່ານເຫັນວ່າພຣະເຢຊູໄດ້ພ່າຍແພ້ ແທນທີ່ຈະໄດ້ຊັຍຊະນະທີ່ໄມ້ກາງແຂນ. ຖາມນັກຮຽນວ່າພວກເຂົາເຈົ້າເຄີຍລະອາຍ ຫລືເຄີຍຄິດທີ່ຈະປະຕິເສດພຣະຄຣິດບໍ່ເພາະຄວາມລຳບາກທີ່ພວກເຂົາເຈົ້າພົບໃນຊີວິດ.

### <u>ນຳພາການສຶກສາພຣະທັມ</u> (ໃຊ້ເວລາ 30 ນາທີ)

3. ເຕືອນທຸກຄົນວ່າຊົນຊາດຢິວບໍ່ຍອມຮັບພຣະເມສີອາໃນພຣະທັມເອຊາຢາ 53. ເຣື່ອງນີ້ເປັນເຣື່ອງທີ່ບໍ່ໜ້າເຊື່ອສຳລັບພວກເຂົາ. ແບ່ງຫ້ອງຮຽນອອກເປັນ 4 ກຸ່ມເພື່ອຈະສົນທະນາ ແລະອອກຄວາມເຫັນວ່າພວກເຂົາເຈົ້າຈະຂຽນເຣື່ອງນີ້ ແນວໃດເພື່ອຊົນຊາດອິສຣາເອັນຈະຍອມຮັບພຣະເມສີອາອົງນີ້. ແຕ່ລະກຸ່ມຈະນຳເອົາຫົວຂໍ້ນຶ່ງ ຈາກຫົວຂໍ້ຕໍ່ລົງໄປນີ້ເພື່ອໄປສົນທະນາ.
   (1) ເປັນຜູ້ຮັບໃຊ້ທີ່ເຫລືອເຊື່ອ (53:2-3)
   (2) ຄວາມທົນທຸກອັນເຫລືອເຊື່ອຂອງຜູ້ຮັບໃຊ້ (53:4-6)
   (3) ການມິດງຽບແລະການຕາຍອັນເຫລືອເຊື່ອຂອງຜູ້ຮັບໃຊ້ (53:7-9)
   (4) ລາງວັນອັນເຫລືອເຊື່ອຂອງຜູ້ຮັບໃຊ້ (53: 10-12)

   ແຕ່ລະກຸ່ມອາດຈະປ່ຽນຄວາມເວົ້າ ຫລືລັກສະນະຂອງຜູ້ຮັບໃຊ້ເພື່ອໃຫ້ເປັນທີ່ພໍໃຈຂອງຊາວອິສຣາເອັນ.

4. ຫລັງຈາກເວລາປະມານ 5 ນາທີໃຫ້ແຕ່ລະກຸ່ມກັບມາລາຍງານ;ໃຫ້ຜູ້ຕາງໜ້າອ່ານເຣື່ອງທີ່ຂຽນຂຶ້ນໃໝ່ໃຫ້ທຸກຄົນຟັງ. ໃຊ້ບົດຮຽນເພື່ອອະທິບາຍວ່າເປັນຫຍັງອິສຣາເອັນຈຶ່ງປະຕິເສດຜູ້ຮັບໃຊ້ໃນເອຊາຢາ 53.
   (1) ຊາວຢິວປະຕິເສດຜູ້ຮັບໃຊ້ເພາະເພິ່ນບໍ່ມີຄຸນລັກສະນະຕາມທີ່ພວກເຂົາເຈົ້າສແວງຫາແລະຕ້ອງການ.
   (2) ຜູ້ຮັບໃຊ້ຈຳເປັນຕ້ອງຮັບຄວາມທຸກທໍຣະມານເພາະການລົງໂທດທີ່ພຣະເຈົ້າຊົງຕຽມໄວ້ສຳລັບຄວາມບາບຂອງມະນຸດຊາດທັງຫລາຍ.
   (3) ບົດຮຽນຕອນນີ້ຊີ້ໃຫ້ເຫັນວ່າ ຜູ້ຮັບໃຊ້ບໍ່ແມ່ນແກະທີ່ກຳລັງຢ້ານກົວ ແຕ່ເປັນແກະສຳລັບການຖວາຍເພື່ອໃຫ້ແຜນການໃຫຍ່ຂອງພຣະເຈົ້າສຳເຣັດ.
   (4) ພຣະເຈົ້າຊົງໃຫ້ລາງວັນຜູ້ທີ່ທຳງານສຳເຣັດ. ໃນກໍຣະນີຂອງພຣະເຢຊູກໍເຊັ່ນກັນ, "ພຣະພິໂຣດໄດ້ກາຍມາເປັນຄວາມຮັກແລະຄວາມພໍພຣະທັຍ."

5. ສລຸບບົດຮຽນວ່າເປັນຫຍັງພຣະເຈົ້າຈຶ່ງລົງມາໃນໂລກມະນຸດໃນລັກສະນະຂອງຜູ້ຮັບໃຊ້ທີ່ຕ້ອງທົນທຸກທໍຣະມານແລະສ້າງຄວາມສະດຸດໃຈໃຫ້ກັບຄົນຊາວຢິວ ແລະຫລາຍຄົນທີ່ໄດ້ຍິນຂ່າວປະເສີດ ໂດຍຖ້ອຍຄຳຕໍ່ໄປນີ້:
   (1) ຄວາມຜິດບາບ-- ນີ້ຄືວິທີດຽວທີ່ພຣະເຈົ້າກະທຳກັບຄວາມບາບ.
   (2) ໄມ້ກາງແຂນ-- ພຣະເຢຊູລົງມາໃນໂລກມະນຸດເພື່ອຕາຍທີ່ໄມ້ກາງແຂນ.
   (3) ຕົວຢ່າງ-- ພຣະເຢຊູຊົງເປັນຕົວຢ່າງຂອງຄວາມຍິ່ງໃຫຍ່ທີ່ແທ້ຈິງ. ເວລາເຮົາຮັບເອົາຂ່າວປະເສີດ, ພວກເຮົາກໍຕ້ອງຍອມຮັບໄມ້ກາງແຂນເພື່ອຮັບໃຊ້ພຣະເຈົ້າແລະຮັບໃຊ້ຄົນອື່ນໆ.

6. ກັບໄປຫາພຣະທັມມັດທາຍ 2: 67-75. ຖາມນັກຮຽນວ່າ ມີຫຍັງແດ່ທີ່ເຮັດໃຫ້ເປໂຕກັບໃຈໃນພາຍຫລັງເຣື່ອງໄມ້ກາງແຂນ (ການຄືນພຣະຊົນຂອງພຣະຜູ້ໂຜດ). ສລຸບເບິ່ງລາງວັນຕ່າງໆທີ່ຜູ້ຮັບໃຊ້ໄດ້ຮັບໃນພຣະທັມເອຊາຢາ 53:10 -12. ເຕືອນທຸກຄົນວ່າ ໄມ້ກາງແຂນຄືສັນຍາລັກຂອງການໄດ້ຊັຍຊະນະ; ພຣະເຢຊູຊົງກ່າວໃນໂຢຮັນ 19: 30 ວ່າ "ສຳເຣັດແລ້ວ."

<u>ນຳບົດຮຽນໄປໃຊ້ໃນຊີວິດ</u> (ໃຊ້ເວລາ 15 ນາທີ)

7. ຊັກຊວນນັກຮຽນໃຫ້ເບິ່ງຄຳຕອບຂອງໃສລາວຕໍ່ໄມ້ກາງແຂນ; ໃຫ້ແຕ່ລະຄົນທົບທວນເບິ່ງຄວາມຮູ້ສຶກຂອງເຂົາເຈົ້າ. ຄວາມຢ້ານກົວ ຫລືຄວາມລະອາຍກ່ຽວກັບຄວາມບາບເຮັດໃຫ້ຫລາຍຄົນປະຕິເສດພຣະເຢຊູຄຣິດ. ຊັກຊວນໃຫ້ທຸກຄົນເຊື່ອ ແລະຮັບເອົາຂ່າວປະເສີດຂອງອົງພຣະເຢຊູຄຣິດ ເພື່ອຈະໄດ້ປະກາດກັບຄົນອື່ນໆຕໍ່ໄປ.

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 8
# ຊົງເອີ້ນໃຫ້ເຮັດງານທີ່ລຳບາກ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ເຢເຣມີຢາ 1
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ເຢເຣມີຢາ 1
ຈຸດສຳຄັນຂອງບົດຮຽນນີ້: ບາງຄັ້ງພຣະເຈົ້າຊົງເອີ້ນພວກເຮົາໃຫ້ເຮັດໃນສິ່ງທີ່ຍາກລຳບາກ ໂດຍສັນຍາວ່າພຣະອົງຈະຢູ່ນຳເຮົາ ຖ້າພວກເຮົາສັດຊື່.
ຄຳຖາມເພື່ອການສຳຣວດ: ມີຫຍັງແດ່ທີ່ຍາກລຳບາກຫລາຍ ຊຶ່ງພຣະເຈົ້າຊົງເອີ້ນທ່ານໃຫ້ເຮັດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຈະເບິ່ງປະສົບການຂອງທ່ານເອງ ໃນຂະນະທີ່ກຳລັງຕອບຄຳເອີ້ນຂອງພຣະເຈົ້າ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ກ່ອນມື້ທີ່ຈະສອນບົດຮຽນນີ້ ທ່ານອາດຈະສຳພາດອາຈານຄົນນຶ່ງທີ່ທ່ານຮູ້ຜ່ານທາງໂທຣະສັບ ກ່ຽວກັບເຣື່ອງການຖືກເອີ້ນ. ທ່ານອາດຈະໃຊ້ຄຳຖາມດັ່ງຕໍ່ໄປນີ້:
   - ທ່ານຖືກພຣະເຈົ້າເອີ້ນເມື່ອອາຍຸໄດ້ຈັກປີ?
   - ການຕອບການຊົງເອີ້ນເປັນເຣື່ອງຍາກ ຫລືວ່າງ່າຍສຳລັບທ່ານ?
   - ທ່ານຮູ້ຈັກວຽກທີ່ພຣະເຈົ້າຊົງເອີ້ນໃຫ້ເຮັດຫລາຍປານໃດໃນຕອນນັ້ນ?
   - ທ່ານບອກໃຫ້ຄົນອື່ນໆຮູ້ເຖິງການຖືກເອີ້ນເວລາໃດ?

   ເລີ້ມການສຶກສາພຣະທັມຕອນນີ້ດ້ວຍເຣື່ອງ "ການຊົງເອີ້ນ" ຂອງອາຈານຜູ້ນຶ່ງທີ່ທ່ານໄດ້ສຳພາດມາ. ປຽບທຽບການຊົງເອີ້ນຂອງຜູ້ທີ່ທ່ານສຳພາດມາແລ້ວນັ້ນກັບການຊົງເອີ້ນຂອງເຢເຣມີຢາ ເພື່ອແນະນຳບົດຮຽນ

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ທ່ານອາດຈະໃຊ້ໂປສເຕີ້ເພື່ອຂຽນຕາຕະລາງດັ່ງຕໍ່ໄປນີ້ເພື່ອຈະເປັນເຄື່ອງຊ່ວຍໃນການສອນ. ໃຫ້ໃສ່ຊື່ຕາຕະລາງນີ້ວ່າ, "ໂລກໃນສມັຍຂອງເຢເຣມີຢາ." ໃຫ້ໃຊ້ແຜນທີ່ໃນສມັຍພຣະສັນຍາເດີມເພື່ອຊ່ວຍ, ຖ້າຫາກມີ.
   - 627--ພຣະເຈົ້າຊົງເອີ້ນເຢເຣມີຢາໃຫ້ປະກາດພຣະທັມ.
   - 622--ກະສັດໂຢສີອາພົບປື້ມພຣະບັນຍັດ.
   - 609--ກະສັດໂຢສີອາຖືກສັງຫານ; ກະສັດເຢໂຮອາກິມຂຶ້ນສເວີຍຣາຊ.
   - 605--ບາບີໂລນທຳລາຍອີຢິບ.
   - 598--ເຢໂຮຍອາກິມສິ້ນພຣະຊົນ; ເຢໂຮຍອາຈິນຂຶ້ນສເວີຍຣາຊ.
   - 597--ບາບີໂລນຍົກທັບມາລ້ອມກຸງເຢຣູຊາເລັມ.

- 587--ເຢຣູຊາເລັມຕົກຢູ່ໃຕ້ອຳນາດຂອງບາບີໂລນ; ເຊເດກີອາຖືກລົງໂທດ; ເຄດາລີອາຖືກຍົກເປັນເຈົ້າແຂວງ.
- 586--ເຢເຣມີຢາຖືກອົພຍົບໄປຢູ່ອີຢິບ.

ປີໃນຕາຕະລາງນີ້ແມ່ນກ່ອນຄຣິສຕະສັກຣາດ (ຄ. ສ). ເຣື່ອງໃນພຣະທັມເຢເຣມີຢາ 1 ເກີດຂຶ້ນເມື່ອປີ 627.

3. ໃນໂປສເຕີ້ອີກແຜ່ນນຶ່ງໃຫ້ຂຽນ "ຊີວະປະວັດຂອງເຢເຣມີຢາ." ເບື້ອງຊ້າຍຂອງໂປສເຕີ້ໃຫ້ຂຽນ: ຊື່, ທີ່ຢູ່, ຊີວິດເມື່ອຍັງເຍົາ, ຄຸນສົມບັດຕ່າງໆ, ປະສົບການທີ່ຜ່ານມາ, ຕຳແໜ່ງຕ້ອງການ, ວັນຖືກຈ້າງ. ບອກໃຫ້ນັກຮຽນຕອບ 3 ຂໍ້ແລກ ຫລັງຈາກເຂົາເຈົ້າໄດ້ອ່ານພຣະທັມເຢເຣມີຢາ 1:1-3. (ເຢເຣມີຢາ, ເມືອງອານາໂທດ, ເກີດໃນຄອບຄົວຂອງປະໂລຫິດ)

4. ຊວນໃຫ້ທຸກຄົນຟັງພຣະທັມເຢເຣມີຢາ 1: 4-8 ເພື່ອຫາຄຳຕອບສຳລັບ 3 ຂໍ້ຕໍ່ໄປ. (ຄຸນສົມບັດ: ຖືກເລືອກກ່ອນເກີດ. ປະສົບການ: ບໍ່ມີ. ຕຳແໜ່ງຕ້ອງການ: ຜູ້ປະກາດສຳລັບຊົນຊາດຕ່າງໆ). ໃຊ້ບົດຮຽນຫົວຂໍ້ "ພຣະເຈົ້າຊົງຮູ້ເຫັນ" ເພື່ອອະທິບາຍການຊົງເອີ້ນຂອງພຣະເຈົ້າ. ໃຊ້ບົດຮຽນຫົວຂໍ້ "ຈຸດອ່ອນຂອງມະນຸດ" ເພື່ອອະທິບາຍການລັງເລໃຈຂອງເຢເຣມີຢາ. ຊັກຊວນນັກຮຽນແຕ່ລະຄົນໃຫ້ພິຈາຣະນາເບິ່ງການຊົງເອີ້ນຂອງໃຜລາວ.

5. ໃຫ້ນັກຮຽນຂຽນປະວັດຂອງເຢເຣມີຢາຕໍ່ ຈາກຂໍ້ຄວາມໃນຂໍ້ 9-10. (ວັນຖືກຈ້າງ: 627 ກ່ອນ ຄ. ສ). ຄຳຖາມ: ມີຫຍັງແດ່ທີ່ພຣະເຈົ້າໄດ້ໃຫ້ຄວາມໝັ້ນໃຈກັບເຢເຣມີຢາໃນວຽກທີ່ຍາກລຳບາກທີ່ເພິ່ນຈະເຮັດ?

6. ໃຫ້ນັກຮຽນຄົນນຶ່ງອ່ານພຣະທັມເຢເຣມີຢາ 1:11-12; 13-16. ໃຊ້ບົດບັລຍາຍໃນຫົວຂໍ້ "ຄຳເຕືອນຂອງພຣະເຈົ້າ" ເພື່ອອະທິບາຍນິມິດໝາຍ 2 ຢ່າງ. ໝາຍເຫດ: ການພິພາກສາຂອງພຣະເຈົ້າມາເຖິງບາບີໂລນ ປະມານ 40 ປີຕໍ່ມາ.

7. ອ່ານໃຫ້ນັກຮຽນຟັງຂໍ້ຫາຕ່າງໆທີ່ພຣະເຈົ້າມີສຳລັບເຢເຣມີຢາ ໃນພຣະທັມ 1:17-19. ຄຳຖາມ: ເຢເຣມີຢາໄດ້ເຣື່ອງມາຈາກໃສ? ໃຜເປັນຜູ້ສົມຮູ້ຮ່ວມຄິດກັບເຂົາ? ເຂົາຈະນຳເຣື່ອງໄປເວົ້າກັບໃຜ? ເຂົາຄິດວ່າຄົນທັງຫລາຍຈະໂຕ້ຕອບແນວໃດ? ໃຜຈະປົກປັກຮັກສາເຂົາ?

## <u>ນຳບົດຮຽນໄປໃຊ້ໃນຊີວິດ</u> (ໃຊ້ເວລາ 15 ນາທີ)

8. ຊັກຊວນນັກຮຽນໃຫ້ຕັ້ງໃຈອະທິຖານເພື່ອຜູ້ຮັບໃຊ້ໃນລະຍະ 6 ອາທິດຂອງການສຶກສາພຣະທັມເຢເຣມີຢາ. ຊັກຊວນນັກຮຽນໃຫ້ສແດງຄວາມເຫັນໃຈ ແລະໃຫ້ການສນັບສນູນສິດຍາພິບານແລະຄອບຄົວ.

# <u>ຄຳແນະນຳສຳລັບຄຣູສອນ</u>
# <u>ບົດຮຽນທີ 9</u>
# <u>ເມື່ອເຊື່ອຜິດບ່ອນ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ເຢເຣມີຢາ 7:1-15
<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> ເຢເຣມີຢາ 7:1-15; 26:1-24
<u>ຈຸດສຳຄັນຂອງບົດຮຽນນີ້:</u> ຄົນທັງຫລາຍຫລອກລວງຕົວເອງວ່າໄດ້ຢູ່ທີ່ປອດພັຍແລ້ວ; ພວກເຂົາເຊື່ອວ່າພຣະເຈົ້າຈະຕ້ອງຊ່ວຍເຫລືອພວກຕົນເພາະພວກເຂົານະມັສການພຣະເຈົ້າ; ແຕ່ຄວາມຈິງແລ້ວພວກເຂົາບໍ່ໄດ້ດຳເນີນຊີວິດຕາມແນວທາງຂອງພຣະອົງເລີຍ.
<u>ຄຳຖາມເພື່ອການສຳຣວດ:</u> ທ່ານຄິດວ່າພຣະເຈົ້າຈະຕ້ອງເຮັດຫຍັງເພື່ອທ່ານແດ່?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອພິຈາຣະນາເບິ່ງວ່າຂ້ອຍອາດຈະຄິດວ່າພຣະເຈົ້າຈຳຕ້ອງເຮັດຫຍັງແດ່ໃຫ້ຂ້ອຍເມື່ອຂ້ອຍບອກວ່າຂ້ອຍໄດ້ເຊື່ອໃນພຣະອົງ.

## <u>ແຜນສຳລັບການສອນ</u>

## <u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u> (ໃຊ້ເວລາ 5 ນາທີ)

1. ຂຽນຄຳຖາມຕໍ່ໄປນີ້ໃສ່ທຸງທີ່ເຮັດດ້ວຍກະດາດສີຂາວ; ທ່ານອາດຈະຂຽນດ້ວຍມາກເກີ້ສີແດງ, ສີຂາວ, ແລະສີຟ້າ: <u>ແມ່ນຫຍັງເຮັດໃຫ້ປະເທດຂອງເຮົາປອດພັຍ?</u> ຕິດທຸງໄວ້ໜ້າຫ້ອງຮຽນ. ໃນກະດານຂຽນຄຳຕອບດັ່ງຕໍ່ໄປນີ້:

    ___ກຳລັງທະຫານ
    ___ຜູ້ນຳປະເທດທີ່ເຂັ້ມແຂງ
    ___ປະຊາຊົນທີ່ຢຳເກງພຣະເຈົ້າ
    ___ຄວາມເຊື່ອທາງສາສນາຫລາຍໆຢ່າງ
    ___ຄວາມຈະເຣີນດ້ານເສຖກິດ
    ___ຄວາມພະຍາຍາມຂອງສ່ວນບຸກຄົນ

ທ່ານອາດຈະຖາມຄວາມເຫັນຈາກນັກຮຽນເພີ້ມເຕີມ ຫລືໃຊ້ເວລາສົນທະນາຄຳຕອບແຕ່ລະຂໍ້.

2. ຂຽນຄຳຖາມຂໍ້ທີ 2 ໃສ່ທຸງທີ່ເຮັດດ້ວຍກະດາດສີຂາວ; ທ່ານອາດຈະຂຽນດ້ວຍມາກເກີ້ສີແດງ, ສີຂາວ, ແລະສີຟ້າ: <u>ພຣະເຈົ້າມີພາຣະທີ່ຈະປົກປັກຮັກສາປະເທດອະເມຣິກາໃຫ້ປອດພັຍບໍ່?</u> ໃຊ້ຄວາມຄິດໃນເຣື່ອງນີ້ເພື່ອແນະນຳບົດຮຽນໃນຕອນນີ້.

## <u>ນຳພາການສຶກສາພຣະທັມ</u> (ໃຊ້ເວລາ 30 ນາທີ)

3. ອ່ານເຢເຣມີຢາ 7:1-2 ແລ້ວໃຫ້ຜູ້ນຶ່ງອ່ານຄຳອະທິບາຍໃນຫົວຂໍ້ "ເບື້ອງຫລັງຂອງການເທສນາ" ໃນບົດຮຽນ. ຄຳຖາມສຳລັບນັກຮຽນ; <u>ພວກທ່ານໄດ້ຍິນຫຍັງແດ່ຈາກສິ່ງທີ່ໄດ້ອ່ານຈົບໄປ?</u> ເນັ້ນເຖິງວ່າຄົນໃນສມັຍຂອງ

ເຢເຣມີຢາບໍ່ໄດ້ເຊື່ອຟັງກົດຂອງພຣະເຈົ້າໃນການປະພຶດຂອງພວກເຂົາ. ເຂົາເຈົ້າຄິດວ່າພຣະເຈົ້າມີໜ້າທີ່ໃນການປ້ອງກັນຄວາມປອດໄພຂອງວິຫານທີ່ຢູ່ໃນກຸງເຢຣູຊາເລັມ ແລະເຂົາເຈົ້າຄິດວ່າບໍ່ມີໃຜຈະມາເອົາຊະນະພວກເພິ່ນໄດ້. ພວກເຂົາຄິດຜິດໄປວ່າຄວາມປອດໄພຂອງພວກຄົນບໍ່ໄດ້ຢູ່ທີ່ການກັບໃຈ ຫລືຊີວິດທີ່ບໍຣິສຸດ.

4. ໃຊ້ກະດາດສີເຮັດເປັນຮູບລູກສອນເພື່ອຈະໃຊ້ເປັນເຄື່ອງຊີ້. ເອົາລູກສອນແນໃສ່ປີ 609 ກ່ອນ ຄ. ສ ຊຶ່ງເປັນປີທີ່ກະສັດເປໂຣຍອາກິມມີອຳນາດ (ໃຊ້ຕາຕະລາງທີ່ທ່ານມີຢູ່ແລ້ວໃນບົດຮຽນບົດທີ 8, ຂໍ້ 2). ບັລຍາຍສະພາບການໃນສມັຍນັ້ນເພື່ອຊ່ວຍຄວາມເຂົ້າໃຈ.

5. ແບ່ງກະດານໃຫ້ເປັນສອງພາກ; ຂີດເສັ້ນຣະຫວ່າງກາງ. ຝ່າຍນຶ່ງໃຫ້ຂຽນ "ພວກເຂົາ" ແລະອີກຝ່າຍນຶ່ງໃຫ້ຂຽນ "ພວກເຮົາ." ໃຫ້ນັກຮຽນຟັງເບິ່ງວ່າຄວາມຜິດບາບຂອງຊາວອິສຣາເອັນມີຫຍັງແດ່ ໃນຂະນະທີ່ທ່ານກຳລັງອ່ານເຢເຣມີຢາ 7: 3-8. ໃຫ້ຂຽນຄວາມຜິດຕ່າງໆທີ່ນັກຮຽນໄດ້ພົບໃສ່ກະດານໃຕ້ກ້ອງຫົວຂໍ້ "ພວກເຂົາ." ຖ້າມີຫຍັງຂາດໃຫ້ທ່ານຕື່ມໃສ່.

   ຖາມນັກຮຽນວ່າ ໃນທຸກມື້ນີ້ພວກເຮົາໄດ້ເຮັດຄວາມຜິດບາບແນວໃດແດ່? ໃຫ້ຂຽນທຸກໆຢ່າງໃສ່ຝ່າຍ "ພວກເຮົາ" ໃນກະດານ. ຕຽມພ້ອມທີ່ຈະເພີ້ມເຕີມສິ່ງເຫລົ່ານີ້ເຊັ່ນ: ບໍ່ເອົາໃຈໃສ່ເຣື່ອງພຣະເຈົ້າ, ເຮັດການບໍ່ສົມຄວນກັບຄົນຕ່າງ ດ້າວ ຫລືຄົນທີ່ມີຜິວພັນບໍ່ເໝືອນດັ່ງເຮົາ, ບໍ່ຍອມຊ່ວຍຄົນຍາກຈົນ, ບໍ່ສົນໃຈກັບຄົນທີ່ຂາດເຂີນ, ກ່າວຮ້າຍຄົນອື່ນ, ໃຊ້ຊີວິດເໝືອນຊາວໂລກທີ່ບໍ່ຮູ້ພຣະເຈົ້າ.

6. ເຮັດແບບດຽວກັບຂໍ້ 5 ທີ່ຜ່ານມາສຳລັບເຢເຣມີຢາ 7:9-11. ແນະນຳໃຫ້ຂຽນສິ່ງເຫລົ່ານີ້ໃສ່ກ້ອງ "ພວກເຮົາ" ເຊັ່ນປົກປິດຄວາມບາບ, ບໍ່ຍອມສາຣະພາບ ຫລືປ່ຽນແປງ, ນະມັສການແບບບໍ່ໄດ້ເປີດໃຈໃຫ້ພຣະເຈົ້າ, ນະມັສການສິ່ງ ອື່ນໆຊຶ່ງບໍ່ແມ່ນພຣະເຈົ້າ (ເບິ່ງຫົວຂໍ້ "ຄວາມຜິດບາບຖືກເປີດເຜີຍ" ໃນບົດຮຽນ).

7. ອະທິບາຍຄຳເຕືອນຂອງພຣະເຈົ້າກ່ຽວກັບເມືອງຊີໂລໃນ 7:12-15 ໂດຍໃຊ້ຄຳອະທິບາຍໃນຫົວຂໍ້ "ແກ້ຄວາມເຂົ້າໃຈຜິດ" ໃນບົດຮຽນ.

8. ພານັກຮຽນໄປເບິ່ງພຣະທັມເຢເຣມີຢາ 26: 7-24. ເຕືອນນັກຮຽນວ່າພຣະທັມຕອນນີ້ເວົ້າເຣື່ອງດຽວກັນກັບເຢເຣມີຢາບົດທີ 7 ທີ່ກຳລັງສຶກສາຢູ່. ໃຫ້ນັກຮຽນຄົນນຶ່ງອ່ານ 26:7-9, ສັງເກດເບິ່ງຄຳຕອບຂອງພວກປະໂລຫິດແລະຜູ້ປະກາດພຣະທັມປອມ. ໃຫ້ອີກຄົນນຶ່ງອ່ານ 26:10-11, 16 ຊຶ່ງກ່ຽວກັບພວກຜູ້ນຳ. ໃຫ້ຜູ້ທີ 3 ອ່ານ 26:12-15 ຊຶ່ງເປັນຄຳເວົ້າຂອງເຢເຣມີຢາ. ອ່ານຄຳຕັດສິນໃນ 26:24. ຄຳຖາມ: <u>ເຢເຣມີຢາປະກາດກັບໃຜ, ຄົນທີ່ໄປໂບດ ຫລື ກັບຄົນນອກສາສນາ? ມີໃຜເວົ້າແທນພຣະເຈົ້າແດ່ກ່ຽວກັບການບໍ່ຈິງໃຈຂອງພວກເຊື່ອຖືສາສນາທັງຫລາຍ? ພວກເຮົາຄວນຈະຕອບຮັບແນວໃດເວລາເຮົາໄດ້ຍິນພຣະທັມທີ່ຕັດສິນລົງໂທດພວກເຮົາ?</u>

## <u>ນຳບົດຮຽນໄປໃຊ້ໃນຊີວິດ</u> (ໃຊ້ເວລາ 15 ນາທີ)

9. ຄຳຖາມ: ມີຫຍັງແດ່ທີ່ພວກເຮົາສາມາດເຮັດໄດ້ ເພື່ອໃຫ້ການນະມັສການພຣະເຈົ້າເປັນເວລາເພື່ອການປ່ຽນແປງຊີວິດທີ່ແທ້ຈິງ? ຂຽນຄຳຕອບໃສ່ກະດານ (ຄຳແນະນຳ: ຮ່ວມໃນລາຍການທຸກໆຕອນ, ຂໍພຣະເຈົ້າໃຫ້ເວົ້າກັບພວກເຮົາ ແລະປ່ຽນແປງພວກເຮົາ, ສາຣະພາບຄວາມຜິດບາບທີ່ເຮົາຮູ້, ບັນທຶກຄຳເທສນາ, ຕັ້ງເປົ້າໝາຍສຳລັບຕົວເອງໃນການນະມັສການແຕ່ລະອາທິດ, ໃຊ້ຊີວິດດ້ວຍຄວາມສັດຊື່ຕໍ່ພຣະເຈົ້າ). ຊັກຊວນນັກຮຽນໃຫ້ຈົດເອົາ

ຄຳຕອບທີ່ຂຽນໄວ້ໃນກະດານ.

10. ກັບໄປຫາຂໍ້ ໒, ເບິ່ງຄຳຖາມທີ່ວ່າ, <u>ພຣະເຈົ້າມີພາຣະທີ່ຈະປົກປັກຮັກສາປະເທດອະເມຣິກາໃຫ້ປອດພັຍບໍ່?</u> ໃຫ້ໂອກາດເພື່ອຄຳຕອບຈາກນັກຮຽນ. ຂໍ້ຊວນຄິດ: <u>ທ່ານຄິດວ່າພວກເຮົາພາກັນຄິດຜິດເໝືອນຊາວອິສຣາເອນທີ່ຜູ້ປະກາດພຣະທັມເຢເຣມີຢາພຍາຍາມຈະຊ່ວຍຢູ່ນັ້ນບໍ່?</u> ອະທິຖານປິດການຮຽນ.

## ຄໍາແນະນໍາຄູສອນ
## ບົດຮຽນທີ 10
## ຕັກເຕືອນເຈົ້າຊີວິດ

---

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ເຢເຣມີຢາ 22:1-5, 13-17; 23:9-18

ຂໍ້ພຣະຄັມພີທັງຫມົດສໍາລັບບົດຮຽນນີ້: ເຢເຣມີຢາ 22:1--23:40

ຈຸດສໍາຄັນຂອງບົດຮຽນນີ້: ຜູ້ນໍາເປັນຜູ້ຮັບຜິດຊອບແລະເຫັນພ້ອມໃນການຊົງນໍາຂອງອົງພຣະຜູ້ເປັນເຈົ້າ.

ຄໍາຖາມເພື່ອການສໍາຣວດ ພຣະເຈົ້າຊົງໃຫ້ທ່ານມີຄວາມເຊື່ອໃນການຮັບຜິດຊອບແນວໃດ?

ຈຸດປະສົງຂອງບົດຮຽນນີ້: ເພື່ອບອກໃຫ້ຮູ້ວ່າພຣະເຈົ້າມີພຣະປະສົງໃຫ້ຜູ້ນໍາທຸກຄົນເຂັ້ມແຂງ

ຫນ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນ

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ຊັກຊວນໄພ່ພົນຂອງອົງພຣະຜູ້ເປັນເຈົ້າໃຫ້ຖວາຍຕົວຮັບໃຊ້
- ເຫັນທຸກຄົນເປັນສິພຣະທັດຂອງອົງພຣະຜູ້ເປັນເຈົ້າ.
- ເສີມສ້າງຄອບຄົວໃຫ້ເຂັ້ມແຂງ.
- ຝຶກຫັດ, ສິດສອນໃຫ້ການເປັນຜູ້ຮັບໃຊ້

### ແຜນສໍາລັບການສອນ

1. ຂຽນ ເຈົ້າຊີວິດ ໃສ່ກະດານ. ຖາມນັກຮຽນແລະຂຽນຄໍາຕອບນັກຮຽນລົງກ້ອງຄໍາວ່າ ເຈົ້າຊີວິດ.
   ກ. ໃຜເຄີຍເຫັນເຈົ້າຊີວິດແດ່? ໄດ້ເຂົ້າໃກ້ເພິ່ນຫລາຍປານໃດ? ໄດ້ໂອ້ລົມຫຍັງກັບເພິ່ນແດ່?
   ຂ. ເຈົ້າຊີວິດມີອໍານາດຫລາຍປານໃດ?
   ຄ. ຫາກເຈົ້າຊີວິດເຮັດຜິດ ແມ່ນໃຜຈະເປັນຜູ້ບອກເພິ່ນ?

2. ແຕ່ງໃຫ້ນັກຮຽນຜູ້ນຶ່ງເປັນເຈົ້າຊີວິດ ເຢໂຮຍອາກິມ (ເຈົ້າຊີວິດແຫ່ງຢູດາ).
   ກ. ກໍາລັງສ້າງພະຣາຊວັງຢ່າງກວ້າງຂວາງແລະສວຍງາມ.
   ຂ. ນັກຮຽນໃນຫ້ອງທັງຫມົດເປັນຄົນງານສ້າງພະຣາຊວັງໂດຍບໍ່ໄດ້ຮັບຄ່າຈ້າງ.
   ຄ. ຄົນງານທັງຫມົດບໍ່ກ້າປາກ ເພາະຮັກສາຊີວິດຂອງຕົນເອງ.

3. ແຕ່ງໃຫ້ຜູ້ນຶ່ງເປັນ ເຢເຣມີຢາ ຜູ້ທີ່ພຣະເຈົ້າໃຊ້ໃຫ້ໄປ, ເຕືອນເຈົ້າຊີວິດເຢໂຮຍອາກິມ.
   ກ. ຖາມນັກຮຽນ "ເວົ້າຕາມຄວາມຈິງ ທ່ານຈະເຮັດແນວໃດເມື່ອຖືກໃຊ້ໄປສັ່ງເຈົ້າຊີວິດ"?
   ຂ. ບາງທີ່ນັກຮຽນອາຈຕອບວ່າ "ພຣະເຈົ້າໃຊ້ໄປບໍ່ຢ້ານ" ຈຶ່ງຖາມຕໍ່ໄປ ທ່ານຄິດບໍ່ວ່າພຣະເຈົ້າໄດ້ໃຊ້ທ່ານ ໄປບອກນາຍຂອງທ່ານຜູ້ທີ່ທ່ານເຮັດການນໍາເພິ່ນທຸກວັນນີ້ ຫລືໄປບອກອະດີດເຈົ້ານາຍຈາກເມືອງລາວ

ທ່ານໄດ້ໂອ້ລົມແລະບອກເພິ່ນແລ້ວບໍ່? ເມື່ອໂອ້ລົມກັບເຈົ້ານາຍຈຶ່ງລະວັງຄຳເວົ້າວ່າຈະເວົ້າຢ່າງໃດ?

ຄ. ຢ່າລືມວ່າເຈົ້າຊີວິດມີອຳນາດສັ່ງປະຫານຊີວິດຂອງທ່ານໄດ້ທຸກເວລາ.

4. ເລີ່ມຕົ້ນບົດຮຽນຂໍ້ທີ 1 <u>ເຢເຣມີຢາຕໍ່ໜ້າເຈົ້າຊີວິດ</u> ( 22:1-5)

ກ. ໃຫ້ຜູ້ສະແດງເປັນເຢເຣມີຢາອ່ານ 22:1-5 ແລະໃຫ້ໄປບອກເຈົ້າຊີວິດຕາມທີ່ອ່ານນັ້ນ.

ຂ. ໃຫ້ຜູ້ສະແດງເປັນເຢເຣມີຢາໃຊ້ທ່າທີຕົວຈິງ ຄ້າຍກັບວ່າລາວໄດ້ເວົ້າກັບເຈົ້ານາຍຄົນນຶ່ງໃນເວລານີ້.

ຄ. ຖາມນັກຮຽນຜູ້ອື່ນ ທ່ານຈະມີທ່າທີແນວໃດເມື່ອທ່ານເປັນເຢເຣມີຢາ? ທ່ານໄດ້ຮຽນຫຍັງຈາກຊີວິດຂອງເຢເຣມີຢາແດ່? ຮຽນແລ້ວທ່ານຈະເຮັດແນວໃດ?

5. ບົດຮຽນຫົວຂໍ້ທີ 2 <u>ເຢເຣມີຢາກ່າວເຣື່ອງເຈົ້າຊີວິດ</u> ( 22:13-17)

1: ສ້າງພະຣາຊວັງຂອງຕົນເອງຢ່າງກວ້າງຂວາງ ແລະສວຍງາມຢ່າງບໍ່ສັດຊື່ (ຂໍ້ 13ກ).

2. ເພິ່ນບໍ່ໄດ້ຈ່າຍຄ່າແຮງງານໃຫ້ກັບຄົນງານ (ຂໍ້ 13ຂ).

3. ເວົ້າຈາສຳຫາວ (ຂໍ້ 14).

4. ເພິ່ນບໍ່ເດີນຕາມທາງຂອງພໍ່ເພິ່ນທີ່ເປັນເຈົ້າຊີວິດອົງກ່ອນ (ຂໍ້ 15-16).

5. ເຢເຣມີຢາບອກເຈົ້າຊີວິດເຢໂຮຍອາກິມວ່າເພິ່ນເປັນເຈົ້າຊີວິດທີ່ເຫັນແກ່ປໂຍດສ່ວນຕົວ, ກົດຂີ່ຂົ່ມເຫັງ, ເຂັ່ນຂ້າຄົນບໍ່ມີຄວາມຜິດ (ຂໍ້ 17).

6. ບົດຮຽນຫົວຂໍ້ທີ 3 <u>ເຢເຣມີຢາກ່າວເຖິງຜູ້ປະກາດຈອມປອມ</u> (23:9-18)

ພຣະຜູ້ເປັນເຈົ້າສັ່ງເຢເຣມີຢາໄປບອກສິ່ງທີ່ພວກຜູ້ປະກາດພຣະທັມເຮັດຜິດມີດັ່ງນີ້;

1. ພວກເຂົາປະກາດພຣະທັມແຫ່ງຄວາມຈິງ ສ່ວນຕົວເຂົາບໍ່ປະຕິບັດຕາມຄວາມຈິງ.
2. ພວກເຂົາກ່າວພຣະທັມເພື່ອໃຫ້ຜູ້ຟັງຖືກໃຈ ໂດຍບໍ່ຕຳໜິເມື່ອເຂົາເຮັດຜິດ.
3. ເຂົາກ່າວເລື້ອຍໆວ່າບໍ່ຈຳເປັນຕ້ອງປະຕິບັດໝົດທຸກຢ່າງທີ່ພຣະເຈົ້າສັ່ງ.
4. ເຂົາສ້າງຊື່ສຽງຕົນເອງໂດຍໃຊ້ພຣະທັມພຣະເຈົ້າເຂົ້າແອບແຝງ.

7. ສລູບດັ່ງນີ້:

1, ເປັນຫຍັງຜູ້ປະກາດພຣະທັມເຢເຣມີຢາຈຶ່ງມີອຳນາດຈາກພຣະເຈົ້າຫລາຍກວ່າຜູ້ປະກາດພຣະທັມອື່ນໆ ແລະຍັງມີອຳນາດຫລາຍກວ່າເຈົ້າຊີວິດເຢໂຮຍອາກິມອີກດ້ວຍ.

2. ທ່ານເຄີຍເຮັດຫຍັງເປັນບາງຢ່າງແລ້ວມີຄົນອື່ນມາບອກວ່າບໍ່ຖືກ ທ່ານຮູ້ສຶກແນວໃດ?

3. ເຈົ້າຊີວິດເຢໂຮຍອາກິມແລະພວກຜູ້ປະກາດພຣະທັມບໍ່ຟັງຄຳຕັກເຕືອນຂອງເຢເຣມີຢາ ທ່ານຄິດແນວໃດ?
4. ຊີວິດຂອງເຈົ້າຊີວິດແລະພວກຜູ້ປະກາດພຣະທັມເປັນບົດຮຽນອັນໃດແກ່ທ່ານ?

5. ໃນຖານະທີ່ທ່ານເປັນຄຣິສຕຽນທ່ານສົມຄວນຈະບອກຜູ້ອື່ນບໍ່ ໃນເມື່ອເພິ່ນເຮັດຜິດ?

6. ທ່ານຈະບອກເພິ່ນດ້ວຍວິທີໃດ?

7. ທ້າທາຍນັກຮຽນໃຫ້ອອກໄປບອກເຣື່ອງພຣະເຈົ້າຢ່າງນ້ອຍຜູ້ນຶ່ງຈາກວັນນີ້ເຖິງວັນອາທິດໜ້າ

ແລະເລົ້າໂລມນັກຮຽນວ່າ ບໍ່ຕ້ອງຢ້ານເພາະທ່ານບໍ່ໄດ້ອອກໄປບອກເຈົ້າຊີວິດເໝືອນເຢເຣມີຢາ ແຕ່ທ່ານຄວນຣະມັດຣະວັງຄຳເວົ້າຂອງທ່ານຢ້ານວ່າຈະເວົ້າໜັກເກີນໄປ.

8. ອ້ອນວອນປິດ ແລະອ້ອນວອນຂໍການຊົງນຳຈົນກວ່າຈະພົບກັນອີກ.

## ຄຳແນະນຳຄູສອນ
## ບົດຮຽນທີ 11
## ຮັບໃຊ້ດ້ວຍໃຈກ້າ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ເຢເຣມີຢາ 37:1-17; 38:14-23
ຂໍ້ພຣະຄັມພີທັງຫມົດສຳລັບບົດຮຽນນີ້: ເຢເຣມີຢາ 37:1--39:10
ຈຸດສຳຄັນຂອງບົດຮຽນນີ້: ໄວ້ວາງໃຈໃນການຊົງນຳຂອງອົງພຣະຜູ້ເປັນເຈົ້າ
ຄຳຖາມເພື່ອການສຳຣວດ ເປັນຫຍັງຄົນທັງຫລາຍຈຶ່ງບໍ່ຍອມຮັບພຣະທັມພຣະເຈົ້າ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຫາທາງໃຫ້ເຮົາເປີດກວ້າງວາງໃຈໃນການຊົງນຳ

ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ຊັກຊວນໄພ່ພົນຂອງອົງພຣະຜູ້ເປັນເຈົ້າໃຫ້ຖວາຍຕົວຮັບໃຊ້

### ແຜນສຳລັບການສອນ

ກະສັດເຊເດກີຢາເປັນກະສັດອົງສຸດທ້າຍຂອງຢູດາ ໃນສມັຍຢູດາຖືກຍຶດຄອງໂດຍບາບີໂລນໃນ ຄ.ສ 598-587. ກະສັດອົງນີ້ກ່ອນຈະເປັນກະສັດກໍແມ່ນກະສັດເນບູກາເນັດຊາເປັນຜູ້ແຕ່ງຕັ້ງເພິ່ນໃຫ້ເປັນກະສັດ ແຕ່ກະສັດເຊເດກີຢາບໍ່ເປັນຄົນສັດຊື່ ເພິ່ນໄດ້ຫັກຫລັງເນບູກາເນັດຊາກະສັດແຫ່ງບາບີໂລນ. ເມື່ອເປັນດັ່ງນັ້ນກະສັດເນບູກາເນັດຊາຈຶ່ງຍົກທັບໂຈມຕີຢູດາ. ໃນບົດຮຽນນີ້ທ່ານຈະເຫັນຄວາມປຣາຊັຍຂອງກະສັດເຊເດກີຢາ ຜູ້ເນຣະຄຸນກະສັດເນບູກາເນັດຊາ ຍິ່ງໄປກວ່ານັ້ນກະສັດເຊເດກີຢາຍັງດື້ດ້ານບໍ່ເຊື່ອຟັງພຣະເຈົ້າໂດຍການກ່າວເຕືອນຂອງຜູ້ຮັບໃຊ້ພຣະເຈົ້າ ເພິ່ນມີແຕ່ຢາກໄດ້ພຣະພອນແລະການຄຸ້ມຄອງຈາກພຣະເຈົ້າ. ເຮົາຈະເຫັນວ່າພຣະເຈົ້າຈະບໍ່ຄຸ້ມຄອງຄົນຢ່າງນັ້ນແນ່ນອນ.

1. ຂຽນປ້າຍນ້ອຍໃສ່ກະດາດແຂງ ເພື່ອເຮັດເຊືອກໃຫ້ຫ້ອຍຄໍດັ່ງນີ້;

ກ. ກະສັດເຢນີຢາ ກະສັດແຫ່ງຢູດາເລືອກຕັ້ງຈາກຂ້າຣາຊການຢູດາ. ເພິ່ນແມ່ນລູກຊາຍຂອງກະສັດ ອາໂຮຍອາກິມກະສັດອົງກ່ອນ. ແຕ່ຖືກປົດອອກໂດຍເນບູກາເນັດຊາ.
ຂ. ກະສັດເຊເດກີຢາ ກະສັດໃຫມ່ຂອງຢູດາຖືກແຕ່ງຕັ້ງຈາກກະສັດເນບູກາເນັດຊາ ໃຫ້ແທນກະສັດ ເຢນີຢາ.
ຄ. ກະສັດເນບູກາເນັດຊາ ກະສັດແຫ່ງບາບີໂລນ ຜູ້ປົກຄອງບາບີໂລນແລະຢູດາ.
ງ. ຄະນະຂ້າຣາຊການແລະທີ່ປຶກສາຂອງກະສັດ ເຊເດກີຢາ.
ຈ. ຜູ້ປະກາດເຢເຣມີຢາ
ສ. ຄຣູແນະນຳໃຫ້ນັກຮຽນເຂົ້າໃຈຕົວລະຄອນແຕ່ລະຄົນຕາມຂຽນໄວ້ຂ້າງເທິງ.

2. ແຕ່ງໃຫ້ນັກຮຽນຈຳນວນນຶ່ງເປັນຕົວລະຄອນຕາມ ປ້າຍນ້ອຍຫ້ອຍຄໍຂ້າງເທິງ.

- ບົດຮຽນຫົວຂໍ້ທີ 1 ເລີ້ມຕົ້ນເຫດການ 37:1-5 (ໃຫ້ນັກຮຽນໄດ້ສະແດງໜ້າເວທີ ຫລືໜ້າຫ້ອງຮຽນ)

3. ໃຫ້ກະສັດ ເຢນີຢາ ຂຶ້ນຄອງຣາດ ເມື່ອພໍ່ຂອງເພິ່ນເສັຽຊີວິດໄປແລ້ວ.

4. ໃຫ້ກະສັດເນບູກາເນັດຊາ ກະສັດປົກຄອງບາບີໂລນ ແລະມີອຳນາດປົກຄອງເຖິງຢູດາ ປົດກະສັດ ເຢນີຢາອອກ ແລ້ວແຕ່ງຕັ້ງ ກະສັດເຊເດກີຢາ ຂຶ້ນແທນ.

5. ເມື່ອກະສັດ ເຊເດກີຢາ ນັ່ງບັນລັງຢູ່ນັ້ນພວກຂ້າຣາຊການແລະທີ່ປຶກສາກໍພ້ອມຢູ່ທີ່ນັ້ນ. ກະສັດໃຊ້ຄົນໄປຫາ ເຢເຣມີຢາ ຂໍໃຫ້ເພິ່ນອ້ອນວອນສຳລັບກະສັດ ເຊເດກີຢາແດ່.

6. ເຢເຣມີຢາ ນຳເອົາຂ່າວທີ່ມາຈາກພຣະເຈົ້າມາສູ່ກະສັດແລະພວກຂ້າຣາຊການທີ່ນັ່ງຢູ່ນັ້ນຟັງ. (ໃຫ້ຕົວລະຄອນທີ່ເປັນເຢເຣມີຢາອ່ານ 37:7-10 ).

7. <u>ບົດເພີ້ມເພື່ອຄວາມເຂົ້າໃຈ</u> ໃຫ້ພວກຂ້າຣາຊການພາກັນເວົ້າກັບກະສັດວ່າ ເຢເຣມີຢາເວົ້າຕົວະ ໄລ່ລາວອອກໄປສາ.

8. ສ່ວນກະສັດເຊື່ອໃນສິ່ງທີ່ເຢເຣມີຢາໄດ້ກ່າວຢູ່ ແຕ່ເພິ່ນເກງໃຈພວກຂ້າຣາຊການຫລາຍກວ່າຈຶ່ງເຮັດຕາມຄຳສັ່ງຂອງຄະນະຣາຊການແລະຄະນະທີ່ປຶກສາ. ( ບາງທີ່ເຮົາກໍເປັນເຊັ່ນນັ້ນ ແທນທີ່ຈະຟັງຄວາມພຣະເຈົ້າ ເຮົາກັບໄປຟັງຄວາມມະນຸດດ້ວຍກັນ )

9. ຄຣູຂອບໃຈນັກສະແດງລະຄອນ ແລ້ວເຊີນເຂົາເຈົ້າໄປນັ່ງບ່ອນນັ່ງປົກະຕິ.

- ບົດຮຽນຫົວຂໍ້ທີ 2 ນຳຂ່າວຈິງທີ່ບໍ່ໜ້າຟັງ 38:6-17

10. ຂໍໃຫ້ເຢເຣມີຢາອ່ານ 37:6-10 ອີກຄັ້ງນຶ່ງ.

11. ບອກນັກຮຽນໃຫ້ເຂົ້າໃຈວ່າ ເຫດທີ່ກອງທັບບາບີໂລນຊຶ່ງເປັນກອງທັບຂອງເນບູກາເນັດຊາບຸກໂຈມຕີ ຄັ້ງນີ້ກໍເພາະກະສັດເຊເດກີຢາ ຜູ້ເປັນກະສັດເນື່ອງຈາກເນບູກາເນັດຊາແຕ່ງຕັ້ງນັ້ນທໍຣະຍົດຕໍ່ເພິ່ນໂດຍການໜີຈາກເອຢິບ. ເມື່ອມີກອງທັບຂອງເອຢິບທີ່ມາຊ່ອຍກະສັດເຊເດກີຢາ ຝ່າຍກອງທັບບາບີໂລນຈຶ່ງຖອຍ ເພາະບໍ່ຢາກປະທະກັນ. ດັ່ງນັ້ນຈຶ່ງບໍ່ເກີດສົງຄາມໃນຄັ້ງນັ້ນ

12. ເມື່ອບໍ່ມີສົງຄາມພາຍນອກເຂົາກໍເຮັດສົງຄາມພາຍໃນ ຄືຈັບແລະຂົ່ມເຫັງຜູ້ປະກາດພຣະທັມເຢເຣມີຢາ.

- ບົດຮຽນຫົວຂໍ້ທີ 2 ກະສັດຫາທາງແກ້ຕົວ 38:14- 23

13. ກະສັດເຊເດກີຢາຖາມເຢເຣມີ ພຣະເຈົ້າສັ່ງຫຍັງອີກແດ່? ເມື່ອເຢເຣມີຢາບອກເພິ່ນກໍຫາວິທີແກ້ຕົວ.

<u>ຄໍາຖາມ:</u>

1. ທ່ານໄດ້ຮຽນຫຍັງຈາກຊີວິດຂອງເຢເຣມີຢາແດ່?

2. ຊີວິດການຮັບໃຊ້ພຣະເຈົ້າຂອງເຢເຣມີຢາ ໄດ້ຫນູນໃຈເຮົາແນວໃດ ເມື່ອເຮົາຫາກຄິດວ່າວຽກງານການຮັບໃຊ້ພຣະເຈົ້ານັ້ນລໍາບາກເຫລືອເກີນ,

3. ໃນຈໍານວນພວກເຮົາມີໃຜແດ່ ເຄີຍຖືກຂ້ຽນຕີ, ຍ່ອນລົງນໍ້າສ້າງຂີ້ຕົມ, ແລະຖືກກັກຂັງຍ້ອນນໍາຂ່າວປະເສີດຂອງພຣະເຈົ້າໄປສູ່ຍາດພີ່ນ້ອງ?

4. ທ່ານໄດ້ຮຽນຫຍັງຈາກຊີວິດຂອງກະສັດເຊເດກີຢາ ທີ່ບໍ່ເຊື່ອຟັງພຣະເຈົ້າ?

5. ທ່ານມີຄວາມເຊື່ອບໍ່ວ່າ ວັນນີ້ພຣະເຈົ້າຈະສົ່ງຂ່າວຕ່າງໆຜ່ານການເທສນາຂອງອາຈານ?

6. ຈົ່ງຈໍາໄວ້ວ່າພຣະເຈົ້າຈະເວົ້າກັບເຮົາທັງຫລາຍຜ່ານຄໍາເທສນາວັນນີ້.

# ຄຳແນະນຳຄູສອນ
# ບົດຮຽນທີ 12
# ເມື່ອຍາມຍາກລຳບາກ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ເຢເຣມີຢາ 32:1-15.
ຂໍ້ພຣະຄັມພີທັງໝົດສຳລັບບົດຮຽນນີ້: ເຢເຣມີຢາ 32.
ຈຸດສຳຄັນຂອງບົດຮຽນນີ້: ເພື່ອບອກໃຫ້ຮູ້ວ່າເຖິງແມ່ນຍາມລຳບາກພຣະເຈົ້າກໍຢູ່ດ້ວຍ.
ຄຳຖາມເພື່ອການສຳຣວດ ເຮົາມີຄວາມຫວັງອັນໃດໃນຍາມຍາກ.
ຈຸດປະສົງຂອງບົດຮຽນນີ້: ເພື່ອຊ່ອຍໃຫ້ເຮົາເຂົ້າໃຈວ່າພຣະເຈົ້າຊົງເປັນຜູ້ຊ່ອຍ.

ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂື້ນແຕ່ລະວັນໆ.
- ຊັກຊວນໄພ່ພົນຂອງອົງພຣະຜູ້ເປັນເຈົ້າໃຫ້ຖວາຍຕົວຮັບໃຊ້

## ແຜນສຳລັບການສອນ

ຊີວິດຂອງຄົນເຮົາຕ່າງຄົນຕ່າງກໍຄິດເຊັ່ນນີ້: ຫາກເປັນຄວາມເຈັບຄວາມເປັນເຮົາມັກຈະຄິດວ່າຂ້ອຍນີ້ແຫລະມີຄວາມເຈັບເປັນຫລາຍກ່ອນຄົນອື່ນ ໃນໂລກນີ້ຄືຈະບໍ່ມີໃຜດອກຈະເຈັບຫລາຍຊໍ່າຂ້ອຍ. ຫາກແມ່ນຄວາມທຸກຍາກກໍມັກຈະເວົ້າວ່າຕົວຂ້ອຍນີ້ທຸກແທ້ທຸກວ່າ ໃນໂລກນີ້ຄືຈະບໍ່ມີໃຜດອກທຸກຊໍ່າຂ້ອຍ. ສ່ວນພວກນັກຮຽນກໍຈະເວົ້າວ່າໂຮງຮຽນຂ້ອຍຫລືວິຊາທີ່ຂ້ອຍຮຽນນີ້ຍາກທີ່ສຸດ ດັ່ງນັ້ນຈຶ່ງບໍ່ມີຄົນຮຽນຫລາຍ. ຫລືບາງຄົນອາຈເວົ້າວ່າໂຮງຮຽນທີ່ຂ້ອຍຮຽນຍາກກວ່າໂຮງຮຽນອື່ນຫລາຍ ສ່ວນໂຮງຮຽນອື່ນນັ້ນໃຫ້ໃບປະກາດງ່າຍໂພດ. ຄັນເວົ້າເຖິງບັນຫາ ເຮົາກໍຈະມັກເວົ້າວ່າ ບັນຫາຂ້ອຍນີ້ໜັກກວ່າໝູ່ ໃນໂລກນີ້ຄືຈະບໍ່ມີໃຜມີບັນຫາໜັກຊໍ່າຂ້ອຍດອກ.

1. ຂໍອາສາສມັກໃຫ້ຜູ້ນຶ່ງເລົ່າເຣື່ອງນັບຕັ້ງແຕ່ມາເຊື່ອພຣະເຈົ້າແລ້ວມີບັນຫາໜັກທີ່ສຸດໃນຊີວິດແມ່ນຕອນໃດ?
   ກ. ຫລັງຈາກເພິ່ນເລົ່າແລ້ວຖາມເພິ່ນວ່າ "ທ່ານເຮັດແນວໃນກັບບັນຫານັ້ນ?"
   ຂ. ຖາມຜູ້ອື່ນເບິ່ງ ມີໃຜມີບັນຫາທີ່ໜັກກວ່ານີ້?
   ຄ. ເມື່ອມີບັນຫາຈິດໃຈຂອງທ່ານຄິດແນວໃດກັບພຣະເຈົ້າ?

2. ຂ້າພະເຈົ້າຂໍແນະນຳທ່ານເຣື່ອງເຢເຣມີຢາຜູ້ປະກາດພຣະທັມພຣະເຈົ້າ ໃນເວລາເພິ່ນມີບັນຫາ.
3. ເລີ້ມຕົ້ນບົດຮຽນຂໍ້ທີ 1 <u>ເຢເຣມີຢາໃນຍາມຍາກ</u> ໂດຍຂໍໃຫ້ຜູ້ນຶ່ງອ່ານ ພຣະທັມເຢເຣມີຢາ 32:1-5.
   ກ. ຂໍ້ 1-2 ພຣະເຈົ້າຊົງສັ່ງເຢເຣມີຢາໄປບອກກະສັດເຊເດກີຢາ ແນວເພິ່ນບໍ່ຢາກໄດ້ຍິນ ແລະເມື່ອໄດ້ຍິນເພິ່ນຈະຕ້ອງໃຈຮ້າຍແນ່ນອນ. ເຫດນີ້ເກີດຂື້ນເພາະເຂົາຖວາຍບູຊາພຣະບາອານ ແລະຖວາຍແກ່ພຣະອື່ນ. (ເມື່ອເພິ່ນໄດ້ຍິນດັ່ງນີ້ເພິ່ນຕ້ອງໃຈຮ້າຍແນ່ນອນ, ກະສັດໃຈຮ້າຍບໍ່ຄືເຮົາທັງຫລາຍໃຈຮ້າຍ).

ຂ. ຂໍ້ 3-5 ເຣື່ອງທີ່ເຢເຣມີຢາໄປເວົ້ານຳກະສັດ.

1. ທ່ານຈະພ່າຍແພ້ສົງຄາມ.
2. ຕົວທ່ານຈະໜີບໍ່ລອດ.
3. ທ່ານຈະຖືກຈັບສົ່ງໄປຫາກະສັດບາບີໂລເນັຽພຣະເຈົ້າຈະຈັດການກັບທ່ານ.
4. ບ້ານເມືອງຂອງທ່ານຈະຖືກພວກສັຕູເຜົາຖິ້ມ.

4. ບົດຣຽນຂໍ້ທີ 2 ຄວາມຫວັງມີດົນ 32:6-15

ກ. ຂໍ້ 6-8 ພຣະເຈົ້າໃຫ້ນິມິດແກ່ເຢເຣມີຢາໃຫ້ຊື້ນາຈາກພີ່ນ້ອງ.
ຂ. ຂໍ້ 9-11 ຕົກລົງຊື້ນາ ແລະເຮັດໜັງສືຊື້ຂາຍເປັນທາງການ.
ຄ. ຂໍ້ 12-14 ເຢເຣມີຢາໂອນດິນນາໃຫ້ແກ່ທ່ານບາຣຸກ ຕໍ່ໜ້າພິຍານ.
ງ. ພຣະເຈົ້າສັນຍາວ່າ ເຮືອນ, ທົ່ງໄຣ່ທົ່ງນາ, ແລະສວນ ຈະມີການຊື້ຂາຍອີກ.

5. ຂໍໃຫ້ຜູ້ນຶ່ງອ່ານຄຳສັນຍາພຣະເຈົ້າໃນຂໍ້ 24:44

6. ເລົ້າໂລມໃຈນັກຮຽນ ຢ່ານ້ອຍໃຈເມື່ອມີບັນຫາ ຈົ່ງໄວ້ວາງໃຈໃນພຣະເຈົ້າດ້ວຍການໄຫວ້ວອນຂໍການຊົງນຳ ເຫມືອນເຢເຣມີຢາໄດ້ເຮັດເປັນຕົວຢ່າງ ແລະສຸດທ້າຍພຣະອົງກໍຈະໃຫ້ຄວາມຫວັງອັນໃຫຍ່ເກີນກວ່າທ່ານຄຶດເຖິງ.
7. ອ້ອນວອນປິດ.

# ຄຳແນະນຳຄູສອນ
# ບົດຮຽນທີ 13
# ສິດຊື່ນຂື້ນໃຫມ່

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ເຢເຣມີຢາ 31:27-34
ຂໍ້ພຣະຄັມພີທັງຫມົດສຳລັບບົດຮຽນນີ້: ເຢເຣມີຢາ 31:27-34
ຈຸດສຳຄັນຂອງບົດຮຽນນີ້: ເພື່ອບອກໃຫ້ຮູ່ວ່າຄວາມເຊື່ອໃນພຣະເຈົ້າເປັນຫົນທາງແຫ່ງຄວາມຫວັງ.
ຄຳຖາມເພື່ອການສຳຣວດ ຊີວິດເມື່ອຕົກຕ່ຳແລ້ວຈະຟື້ນຂື້ນໄດ້ແນວໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຊ່ອຍໃຫ້ເຮົາເຂົ້າໃຈວ່າພຣະເຈົ້າຊົງໃຫ້ຄວາມຫວັງໃຫມ່.

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ນຳຂ່າວປະເສີດຂອງພຣະເຈົ້າໄປສູ່ທຸກຄົນທີ່ພົບເຫັນ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂື້ນແຕ່ລະວັນໆ.
- ຊັກຊວນໄພ່ພົນຂອງອົງພຣະຜູ້ເປັນເຈົ້າໃຫ້ຖວາຍຕົວຮັບໃຊ້.

ຢ່າເຂົ້າໃຈຜິດວ່າບົດຮຽນຂອງເຮົາຮຽນກັບຫລັງ, ຈົ່ງເຂົ້າໃຈວ່າປື້ມເຢເຣມີຢາບໍ່ລຽງລຳດັບບົດຕາມປີແລະເຫດການທີ່ເກີດຂື້ນ. ໃນບົດຮຽນບົດທີ 31 ນີ້ໄດ້ເວົ້າເຣື່ອງພຣະສັນຍາ ໂດຍປຽບທຽບພຣະສັນຍາເດີມແລະພະສັນຍາໃຫມ່ໃສ່ກັນ. ພຣະສັນຍາເດີມນັ້ນພຣະເຈົ້າຊົງສັນຍາໄວ້ກັບອັບຣາຮາມ, ສ່ວນບັນຍັດສິບປະການທີ່ພຣະເຈົ້າໄດ້ຂຽນໃສ່ດານຫີນທີ່ພູເຂົາຊີນາຍນັ້ນເປັນຄຳສັ່ງໃຫ້ປະຕິບັດ. ສ່ວນສັນຍາໃຫມ່ທີ່ເຮົາກຳລັງຈະເວົ້າກັນນີ້ແມ່ນສັນຍາທີ່ສຳຄັນຫລາຍທີ່ສຸດ. ດັ່ງນັ້ນເພື່ອເປັນການເຂົ້າໃຈເຣື່ອງສັນຍາຈົ່ງພານັກຮຽນສຶກສາດັ່ງນີ້;

1. ຂຽນຄຳວ່າ "ສັນຍາ" ໃສ່ກະດານ.
   - ຖາມນັກຮຽນວ່າສັນຍາແມ່ນຫຍັງ?
   - ທ່ານເຄີຍສັນຍາອັນໃດແດ່ໃນຊີວິດ?
   - ເວລາທ່ານຈະແຕ່ງງານໄດ້ສັນຍາຫຍັງກັນບໍ່? ຊື້ຣົຖເດ ສັນຍາບໍ່? ຊື້ເຮືອນເດ ສັນຍາບໍ່?
   - ການສັນຍານີ້ແມ່ນຝ່າຍໃດແດ່ເຊັນໃບສັນຍາ?
   - ແມ່ນຫຍັງເປັນເຄື່ອງຫມາຍຫລືຄ້ຳປະກັນໃນການແຕ່ງງານ, ຊື້ຣົຖ ຫລືຊື້ເຮືອນໃຫມ່?

   ຄຳຕອບ: ແນ່ນອນແມ່ນຫນັງສືສັນຍາທີ່ມີລາຍເຊັນ. ຖ້າບໍ່ເຊັນແນ່ນອນບໍ່ໄດ້ຣົຖ ຫລືເຮືອນເລີຍ.
2. ບົດຮຽນຫົວຂໍ້ທີ 1 ພັນທະສັນຍາເດີມ. (ຂໍໃຫ້ຜູ້ນຶ່ງອ່ານ ປະຖົມມະການບົດ 15).
   - ສັນຍາກັບອັບຣາຮາມ (ແມ່ນໃນຣະວ່າງພຣະເຈົ້າແລະອັບຣາຮາມ)
   - ສັນຍາກັບໂມເຊແລະໄພ່ພົນ (ພຣະທັມອົບພະຍົບ 24). ເປັນກົດຣະບຽບການຕ່າງໆ.

- ກະສັດແລະປະຊາຊົນຜິດກົດຣະບຽບສັນຍາຈຶ່ງຖືກລົງໂທດ (ເຢເຣມີຢາ 32:32-35).

3. ຂໍໃຫ້ຜູ້ນຶ່ງອ່ານ ເຢເຣມີຢາ 32:27-30 ພຣະເຈົ້າບໍ່ຄຸ້ມຄອງເຂົາເພາະເຂົາຜິດສັນຍາ.

4. ບົດຮຽນຫົວຂໍ້ທີ 2 ຄວາມຫວັງໃຫມ່. (ຂໍໃຫ້ຜູ້ນຶ່ງອ່ານ ເຢເຣມີຢາ 31:27-32).

5. ບົດຮຽນຫົວຂໍ້ທີ 3 ພຣະສັນຍາໃຫມ່ (31:31-34). (ຂໍໃຫ້ທຸກຄົນອ່ານພ້ອມກັນ ແລະແບ່ງນັກຮຽນເປັນສອງກຸ່ມ)

<u>ກຸ່ມທີນຶ່ງ.</u> ໃຫ້ນັກຮຽນສົນທະນາຄຳວ່າ

1. ບັນຈຸພຣະທັມໄວ້ໃນໃຈ ຫມາຍຄວາມວ່າຢ່າງໃດ?
2. ເຮົາຈະເປັນພຣະເຈົ້າຂອງເຂົາ ຫມາຍຄວາມວ່າຢ່າງໃດ?
3. ເຂົາຈະເປັນໄພ່ພົນຂອງເຮົາ ຫມາຍຄວາມວ່າຢ່າງໃດ?

<u>ກຸ່ມທີສອງ.</u> ໃຫ້ສົນທະນາຄຳວ່າ

1. ເຂົາທັງຫມົດຕັ້ງແຕ່ຜູ້ນ້ອຍຮອດຜູ້ໃຫຍ່ຮູ້ຈັກເຮົາ ຫມາຍຄວາມວ່າຢ່າງໃດ?
2. ເຮົາຈະອະພັຍບາບແກ່ເຂົາ ຫມາຍຄວາມວ່າຢ່າງໃດ?
3. ບໍ່ຈົດຈຳຄວາມຜິດຂອງເຂົາ ຫມາຍຄວາມວ່າຢ່າງໃດ?

6. ຫລັງຈາກ 5 ນາທີແລ້ວໃຫ້ຫົວຫນ້າກຸ່ມລາຍງານຄົນລະ 3 ນາທີ.

7. ຄຣູສລູບບົດຮຽນ ໂດຍຖາມຄຳຖາມ 6 ຄຳໃນບົດຮຽນຫນ້າທທີ 4 ຊຶ່ງເປັນຫນ້າສຸດທ້າຍຂອງບົດຮຽນ.

8. ອ້ອນວອນສາຣະພາບ ແລະຂອບພຣະຄຸນທີ່ຊົງໃຫ້ເຮົາສົດຊື່ນຂື້ນໃຫມ່.